ສະບາຍດີ

ໃນທີ່ສຸດ ນະວະນິຍາຍຊຶ່ງຕໍ່ຈາກເລື້ອງ ໃບໄມ້ຫລົ່ນ
ກໍໄດ້ມີໂອກາດຖືກນຳມາສເນີຕໍ່ທ່ານຜູ່ອ່ານໃນທີ່ສຸດ ນະວະນິຍາຍເລື້ອງທີ່ທ່ານກຳລັງຈະໄດ້ອ່ານ
ໃນຂ້າງລຸ່ມນີ້ເປັນເລື້ອງລາວທີ່ມີຈຸດເດີນເລື້ອງທີ່ເມືອງລາວເປັນຕົ້ນຕໍ
ດ້ວຍວ່າຂ້າພະເຈົ້າມີໂອກາດໄດ້ໄປສັມຜັດກັບບ້ານເກີດເມືອງນອນໃນເມື່ອແປດປີກ່ອນ
ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍວາງຕົວລະຄອນໃນສະພາບສັງຄົມຕອນນັ້ນເປັນຫລັກ ແຕ່ໃນຂະນະດຽວກັນ
ຂ້າພະເຈົ້າກໍຈະຍັງໃຊ້ຂໍ້ມູນທີ່ເກີດຂື້ນໃນຊີວິດປະຈຳວັນໃນປັດຈຸບັນເຂົ້າໃນເລື້ອງໃນບາງຕອນເພື່ອ
ເປັນການເຫມາະສົມອີກດ້ວຍ

ຫາກວ່າມີຂໍ້ຄວາມໃດເປັນການຜິດພາດຫລືລ່ວງເກີນດ້ວຍຄວາມຮູ້ເທົ່າບໍ່ເຖີງການ
ຂ້າພະເຈົ້າກາບຂໍອະໄພລ່ວງຫນ້າມານະທີ່ນີ້ດ້ວຍ

ທ້າຍທີ່ສຸດນີ້ ຂໍໃຫ້ທ່ານຄິດພຽງວ່າ ນີ້ເປັນພຽງນິຍາຍທີ່ເກີດຈາກຈິນຕະນາການຂອງນັກຂຽນຄົນນຶ່ງ
ທີ່ເຖີງຈະບໍ່ໄດ້ພັກພາອາໃສຢູ່ບ້ານເກີດເມືອງດັ່ງເຊັ່ນທີ່ເຄີຍເປັນມາ
ແຕ່ຈິດວິນຍານຂອງເຂົາຄົນນີ້ກໍຍັງຄົງເປັນລາວຢ່າງບໍ່ມີວັນຈືດຈາງ ແລະ ເຫນືອສິ່ງອື່ນໃດຫມົດ
ເຂົາກໍຍັງຮັກໃນສິ່ງທີ່ດີເລີດທີ່ເມືອງລາວ ແລະ ຄົນລາວມີໃຫ້ໄວ້ ແລະ
ນີ້ເອງຄືສິ່ງທີ່ເຂົາຕ້ອງການຢາກນຳອອກມາສເນີໃຫ້ເພື່ອນຮ່ວມຊາດໄດ້ມີໂອກາດຊື່ນຊົມ ແລະ
ຊ່ອຍຊູນຳຈົນຕາບເທົ່າຊົ່ວໃດໆ

ດ້ວຍຄວາມຮັກແພງ
ລາວເກົ່າ
ປ.ລ. ນະວະນິຍາຍເລື້ອງ ໃບໄມ້ປົ່ງ ນີ້ມີດ້ວຍກັນ໑໐ຕອນ ຊຶ່ງບາງຕອນກໍສັ້ນ ແລະ ບາງຕອນກໍຍາວ
ແຕ່ເຖີງຈະຍາວຫລືສັ້ນ ເນື້ອໃນກໍມີຄົບຖ້ວນໃນແຕ່ລະຕອນນັ້ນ

*****

*ລາວເກົ່າຂໍສເນີນະວະນິຍາຍຂອງຄວາມຮັກທີ່ຕ້ອງມາພັດພາກ ອຸດົມການທີ່ຫລໍ່ລ້ຽງຊີວິດ ແລະ ຄວາມເປັນຈິງໃນສັງຄົມໃຫມ່ທີ່ຕ່າງຈາກຄວາມຝັນອັນບໍຣິສຸດຜຸດຜ່ອງ:*

# ໃບໄມ້ປົ່ງ

## ຕອນທີ່໑: ໄກແຕ່ກາຍແຕ່ຫົວໃຈຍັງຢູ່

ອິສຣະມືນຕາຄ້າງເກືອບວ່າຕລອດເວລາທີ່ເຄື່ອງບິນລ່ອງລອຍ ແລະ ທະຍານໄປໃນກາງເວຫາ ບາງຄັ້ງເຂົາຈະສອດສາຍຕາອອກໄປທາງປ່ອງຢ້ຽມນ້ອຍ
ສູ່ເມກເຝື້ອທີ່ຂາວຕະຫງ່ານຢູ່ອ້ອມໆຂ້າງປີກຂອງເຮືອບິນ ແຕ່ພາຍໃນສ່ວນເລິກຂອງຫົວໃຈນັ້ນ ເຂົາຕ່າງກໍຮູ້ດີວ່າ ບໍ່ວ່າສາຍຕາຄູ່ນີ້ຈະຫລຽວແລໄປທິດທາງໃດຫລືຈ້ອງມອງສິ່ງໃດ ພາບຂອງນາງຄົນນັ້ນກໍບໍ່ມີ້ນທີ່ຈະໄປຕິດແນບຢູ່ກັບສິ່ງນັ້ນໄດ້

ອິສຣະອົດຄິດໄປເຖິງກະວີທີ່ເຂົາເຄີຍອ່ານໃນກ່ອນຫນ້ານັ້ນ ຊຶ່ງເຂົາບໍ່ເຄີຍນຶກຝັນວ່າ ອັນຕົວເຂົານີ້ກໍຈະຕົກຢູ່ໃນສະພາບດັ່ງກ່າວບໍ່? ກະວີນັ້ນຂຽນວ່າ

### ເວລານີ້ມີພຽງຂ້ອຍ

ຮູ້ຕົວດີວ່າ
ຄ່ຳນີ້ກໍເຫມືອນຄືນກ່ອນ
ເຊົ້ານີ້ກໍເຫມືອນແລງວານ
ດວງໃຈເຝົ້າຝັນຫາ
ບໍ່ຢາກຄິດ
ແຕ່ໃຈກໍຮ່ຳຮ້ອງ
ບໍ່ຢາກຕລືມ
ແຕ່ຮອຍຍີ້ມກໍບໍ່ເຜີຍ
ບໍ່ຢາກໃຫ້
ແຕ່ນ້ຳຕາກໍໄຫລຊື່ມ

ຄິດເຫັນ
ເວລານີ້ຍາມນີ້ຕອນນີ້
ເຮົາສອງເຄີຍຢູ່ໃນສາຍຕາກັນ
ເຈົ້າອົບຂນົມ
ຂ້ອຍຊູດຫມາກພ້າວ
ເຈົ້າຕັກຂອງກິນໃຫ້
ຂ້ອຍໂມ້ມເຂົ້າປາກ

ຂ້ອຍໂສກເສົ້າ ເຈົ້າປອບໃຈ
ເຈົ້າຍິ້ມ ຂ້ອຍຫົວ
ເຈົ້າເວົ້າ ຂ້ອຍຟັງ

ແຕ່ເວລານີ້ຍາມນີ້ຕອນນີ້
ຫລຽວໄປມາທາງໃດ
ກໍເຫັນແຕ່ຄວາມມືດມິດ
ຄວາມເປົ່າປ່ຽວຄືເຫມືອນຈະຈັບ
ຢູ່ກັບທຸກສິ່ງທີ່ຂ້ອຍຫລຽວເຫັນ
ໂຕະທີ່ເຈົ້າເຄີຍວາງມືທາບ
ຕັ່ງທີ່ເຈົ້າເຄີຍໂຍ້ໂຕລົງນັ່ງ
ກາຍເປັນພາບຕຳຈິດໃຫ້ຫ່ວງຫາອາວອນ
ຂ້ອຍຜູ້ເປັນສ່ວນເກີນຂອງມະນຸສທັມ
ຈຶ່ງຕ້ອງເສົ້າສ້ອຍ
ລ່ອງລອຍໄປກັບຄວາມຄິດ
ປະໃຫ້ເວລາຜ່ານໄປ ແລະ ລາລັບ
ໂອ້ເວລານີ້ຍາມນີ້ຕອນນີ້
ຈະມີພຽງຂ້ອຍໄປອີກດົນປານໃດ?

ມາເຖິງຕອນນີ້ ເຂົາຕະຫນັກຢ່າງເຕັມອົກວ່າ ກະວີທີ່ເຂົາເຄີຍອ່ານໃນເມື່ອກ່ອນນັ້ນ ບໍ່ແມ່ນເລື້ອງທີ່ເຫລວໄຫລໄຮ້ສາລະອີກຕໍ່ໄປ ຊຶ່ງກ່ວາເຂົາຈະຮູ້ ຊຶ່ງກ່ວາເຂົາຈະເຂົ້າໃຈໃນຄວາມຈິງຂອງການພັດພາກໄດ້ ມັນກໍຕຳເຂົາເຂົ້າຢ່າງຈັ່ງໆເສັຽແລ້ວ ແຕ່ເຖິງຢ່າງໃດກໍດີ ອິສຣະກໍຍັງຄົງອີ່ມເອີບໃຈທີ່ເຂົາຍັງມີນາງຢູ່ ແມ້ນວ່າຈະເປັນພຽງພາບໃນຄວາມຊົງຈຳ ແລະ ໃນຈິນຕະນາການທີ່ຫລອກຫລອນນີ້ກໍຕາມ

ທັ້ນເດ! ຮອຍຍິ້ມທີ່ຫວານຊ່ຳໃຈຂອງນາງເຜີຍອອກມາຢູ່ໃນເມກເຝື້ອທີ່ກຳລັງແປຕົວນັ້ນ ອື! ນາງຍິ້ມໃຫ້ເຂົາອີກແລ້ວພ້ອມກັບສົ່ງສາຍຕາອັນລະມຽດລະໄມມາຍັງເຂົາ ເຫມືອນຈະຄອຍກະຊິບຢ້ຳເຕືອນວ່າ ນະທຸກຫົນແຫ່ງທີ່ມີເຂົາຢູ່ນັ້ນ ນາງຈະຢູ່ແນບຊິດຄຽງເຂົາຢູ່ບໍ່ຫ່າງ ເພາະຄວາມຮັກຄວາມສວາດຜູກພັນນີ້ ລະຍະທາງທີ່ຫ່າງໄກ ແລະ ກາລເວລາທີ່ບໍ່ຄອງຄອຍຖ້າໃຜນີ້ ບໍ່ອາດຄົງໄວ້ຊຶ່ງອຳນາດຂອງມັນອີກໄດ້ຕໍ່ໄປ

ໃນຂະນະດຽວກັນນັ້ນ ນະອີກຂອບຟ້ານຶ່ງ ວຽງປະພາເມີ່ສາຍຕາທີ່ເຕັມໄປດ້ວຍຢາດນໍ້າໃສໆ
ອອກໄປສູ່ຂ້າງນອກ ສູ່ຫິມະທີ່ກຳລັງໂປຍລົງມາເປັນທິວແຖວ ສູ່ທ້ອງຟ້າອັນເວີ້ງວ້າງຂາວກະຈ່ານ
ແລະ ສູ່ດວງຈິດຂອງຊາຍທີ່ນາງຫາກໍ່ຮູ້ສຶກຕົວວ່າ ນາງນີ້ຮັກເຂົາເຂົ້າຢ່າງຖອນຕົວບໍ່ຂຶ້ນເສັຽແລ້ວ
ໂອ້ຊີວິດ ຕໍ່ແຕ່ນີ້ໄປນາງຈະຢູ່ຢ່າງໃດ? ຈະມີອີກຈັກວັນບໍ່ທີ່ນາງ ແລະ
ເຂົາຈະວຽນມາປະຈົບພົບພໍ້ຊຶ່ງກັນ ແລະ ກັນອີກ?
ຫລືວ່ານີ້ເປັນການອຳລາພາຈາກໄປເທົ່າຊົ່ວໃດໆຂອງຊີວິດ?



ວຽງປະພາບໍ່ສາມາດໃຫ້ຄຳຕອບແກ່ຕົນເອງ
ໄດ້ ແລະ ນາງກໍບໍ່ຕ້ອງການຄຳຕອບ
ຫາກວ່າຄຳຕອບນັ້ນເປັນດັ່ງໂທດປະຫານ
ນາງຈະຂໍຢູ່ກັບຄວາມຝັນທີ່ລົມໆແລ້ງໆວ່າ
ວັນນຶ່ງເຂົາຄົງຈະກັບຄືນມາຫານາງ ແລະ
ຫາກເມື່ອເຖິງວັນນັ້ນ
ນາງຈະບໍ່ມີວັນປະເຂົາໃຫ້ລ່ອງລອຍໄປອີກ
ເພາະເທົ່າທີ່ເປັນນີ້ມັນກໍສາຫັດພຽງພໍແລ້ວ
ອິສຣະ ຂ້ອຍຮັກເຈົ້າເຫລືອເກີນ
ແລ້ວເຈົ້າເດ? ຈະໃຈຈືດໃຈດຳຈາກຂ້ອຍໄປ
ຢ່າງບໍ່ມີວັນກັບໄດ້ຢ່າງລົງຄໍບໍ່?

ສຽງເພງເບົາໆດັງອອກມາຈາກວິທຍຸ
ຂ້າງບ້ານວ່າ

ຄຳຫມັ້ນສັນຍາທີ່ເຄີຍໃຫ້ໄວ້
ແລະ ຫົນທາງໄກທີ່ຕ້ອງໄດ້ທ່ຽວທ່ອງ
I have a promise to keep
And miles to go…

ຊຶ່ງນາງກັບເອົາໄປຕໍ່ຕື່ມທ່າມກາງນໍ້າຕາທີ່ເຈີ້ງນອງສອງພວງແກ້ມວ່າ
ເພື່ອເຈົ້າຂ້ອຍຈະຍັງຄົງຄອງຄອຍ… ແລະ
ກໍເຫມືອນດັ່ງສ້ວງສວັນຈະຍັງຄົງເປັນພະຍານໃນຮັກອັນແຮກກໍ່ຕົວນີ້

ຫ້ອງກະມົນຂອງນາງນັ້ນກັບໄດ້ຍິນສຽງກະວີທີ່ຄອຍຂັບກ່ອມປອບປະໂລມໃຈນາງ ຊຶ່ງບໍ່ຕ່າງຫຍັງກັບປາກຄຳອັນນຸ່ມນວນ ແລະ ຫນັກແຫນ້ນຂອງເຂົາວ່າ

ທີ່ຮັກ! ເມື່ອຜູ້ຄົນທໍ້ຖອຍຈົ່ມທຸກ
ຫມົດກຳລັງໃຈທີ່ຈະຄອງຄອຍ
ຂໍເຈົ້າຈົ່ງນິ່ງສງົບ
ຍອດດວງໃຈ! ເມື່ອຜູ້ຄົນເລີ້ມປ່ອຍຕົວຫລົ້ນກິນເພື່ອຫລົງລືມ
ຂໍເຈົ້າຈົ່ງຢ່າໄດ້ເຂົ້າຮ່ວມ
ຈົ່ງຕັ້ງໃຈພາວະນາ ແລະ ຄອງຄອຍ
ແມ້ນຟ້າຈະມືດຄໍ້າ ດວງໃຈຈະຫມອງຫມົ່ນ
ແມ້ນຈະກິນເວລາເປັນເດືອນເປັນປີ ກໍຈົ່ງຄອຍ
ແລະ ກໍດ້ວຍການຄອງຄອຍຂອງເຈົ້າເທົ່ານັ້ນ
ມື້ນຶ່ງຂ້ອຍຈະມາ
ຈົ່ງຄອຍ... ຈົ່ງຄອຍ...
ແລ້ວຂ້ອຍຈະມາ
ແລ້ວຂ້ອຍຈະມາ

## ໘. ເຄຫັງທີ່ເຄີຍຢູ່ ອູ່ທີ່ເຄີຍນອນ ແລະ...

ບໍ່ຮູ້ວ່າເຂົາເພີ້ຫລັບໄປຍາມໃດ ອາດຈະເປັນຍ້ອນຕ້ອງທົນທົດຫູ່ຢູ່ໃນເຄື່ອງບິນເປັນເວລາມື້ກ່ວາໆ ຊຶ່ງຖ້າຈະໄດ້ຍືດເສັ້ນຍືດສາຍແລະກິນອາກາດສົດແດ່ກໍພຽງຕອນໄປປ່ຽນເຄື່ອງບິນຕໍ່ທີ່ກຸງໄຕເປ ປະເທດໄຕ້ຫວັນເທົ່ານັ້ນ
ອີກຢ່າງກໍແມ່ນວ່າເມື່ອບໍ່ໄດ້ຫລັບໄດ້ນອນຢ່າງເປັນຕຸເປັນຕະຕັ້ງແຕ່ກ່ອນອອກເດີນທາງພຸ້ນ ເພາະຕ້ອງມົວແຕ່ພະວ້າພະວັງຫ່ວງຫາວຽງປະພາຢູ່ບໍ່ແລ້ວ ໃນທີ່ສຸດເຖີງຢາກບໍ່ຢາກກໍຕາມ ທັມມະຊາດຂອງຮ່າງກາຍທີ່ສຸດແສນຈະອ່ອນເພັຽກໍເຮັດໃຫ້ເປືອກຕາໃຫ້ເຂົາຫລັບລົງຢ່າງແຈບ ສນິດຊຶ່ງກ່ວາຈະມາຮູ້ສຶກຕົວອີກຄັ້ງ ກໍໄດ້ຍິນສຽງບອກວ່າ
ໃຫ້ໃສ່ແນວຮັດແອວເພາະເຄື່ອງບິນຈະລົງສູ່ເດີ່ນແລ້ວ

ອິສຣະຮູ້ສຶກຊຸ່ມເຊືອງໃຈໃຫ້ຕົນເອງເປັນບໍ່ຫນ້ອຍທີ່ພາດໂອກາດຈະໄດ້ເຫັນເຄົ້າຫນໍ່ ຫລືສັນຍາລັກຂອງພື້ນແຜ່ນດິນທີ່ຕົນຈາກມາເປັນເວລາຕັ້ງຫລາຍປີເປັນຄັ້ງທຳອິດ

ໃນມະໂນພາບນັ້ນເຂົາເຄີຍວ່າຈະໄດ້ເຫັນສາຍນ້ຳຂອງທີ່ຂີດຂັ້ນດິນແດນລາວ
ເຫັນແສງສີຂອງດວງຕະວັນພາຍໃຕ້ດິນແດນອັນເປັນທີ່ສຸດແສນຮັກ
ແລະກໍເຫັນພູມລຳເນົາຂອງປະເທດຊາດທີ່ດວງໃຈດວງນີ້ຕ່າງເຝົ້າຝັນຫາ
ຢ່າງບໍ່ມີວັນທີ່ຮູ້ຈັກເຊື່ອມຄາຍ

ແລະເມື່ອເຂົາທອດສາຍຕາຜ່ານປ່ອງຢ້ຽມລົງໄປສູ່ພາບຂ້າງລຸ່ມອີກຄັ້ງ
ເຄື່ອງບິນກໍເຈີດວ່ອນລົງສູ່ເດີ່ນບິນວັດໄຕ  ໂອ້ເມືອງລາວ
ໃນທີ່ສຸດລູກຄົນນີ້ກໍຫວນຍ່ອນກັບຄືນມາສູ່ອ້ອມອົກແມ່ຈົນໄດ້

---




ອິສຣະບໍ່ອາດຈື່ໄດ້ຫມົດວ່າ ຜູ້ຄົນທີ່ມາຄອຍຮັບຕ້ອນເຂົານັ້ນມີໃຜແດ່?
ບາງຄົນກໍພໍຄຸ້ນຫນ້າຢູ່ໂດຍສະເພາະກໍພວກຜູ່ເຖົ້າຜູ່ແກ່ໂດຍສະເພາະກໍແມ່ນລຸງໂຊດ
ທີ່ເປັນອ້າຍຂອງພໍ່  ນອກນັ້ນກໍຍັງມີພີ່ນ້ອງຂອງເຂົາບາງຄົນທີ່ພໍໆຈະຄຸ້ນພຽງຈາກຮູບຖ່າຍ
ທີ່ສົ່ງໄປໃຫ້ເບິ່ງຕອນເຂົາຍັງເປັນນັກຮຽນຢູ່ທີ່ມະຫາວິທະຍາໄລນັ້ນ
ແລະໃນຈຳນວນຜູ່ຄົນທີ່ຈໍ່ແຈມາຮັບຄົນພັດຖິ່ນເຊັ່ນເຂົາແລະຄົນລາວອີກຈຳນວນນຶ່ງທີ່ກັບມາ
ຢ້ຽມບ້ານນັ້ນ  ກັບມີຍິງສາວຄົນນຶ່ງທີ່ມີຫນ້າຕາຄັບຄ້າຍຄັບຄາວຽງປະພາຮ່ວມຢູ່ໃນນັ້ນດ້ວຍ

ອາດຈະເປັນຍ້ອນຄວາມບັງເອີນດັ່ງກ່າວ
ສາຍຕາຂອງເຂົາຈຶ່ງຈັບຈ້ອງໄປທີ່ດວງຕາທີ່ມີແວວຄົມຊຶ້ງຂອງນາງ
ອັນບໍ່ຕ່າງຫຍັງກະວີບົດນຶ່ງທີ່ເຂົາເຄີຍອ່ານຊຶ່ງມີຊ່ວງທຳນອງດັ່ງຕໍ່ລົງໄປນີ້

**ງາມຫວານຄົມຊຶ້ງ**

ງາມເຈົ້າງາມ  ເຮືອນຜົມທີ່ລະມຸງດລະໄມ ສະດຸດຕາ
ຫວານເຈົ້າຫວານ ໃບຫນ້າທີ່ຂາວນວນ ສະດຸດຈິດ
ຄົມເຈົ້າຄົມ ປາຍດັງທີ່ສູງຕະຫງ່ານ ສະດຸດຟ້າ
ຊຶ້ງເຈົ້າຊຶ້ງ ດວງຕາທີ່ຫວານດື່ມດ່ຳ ສະດຸດກະມົນ

ອິສຣະເຝົ້າບອກຕົວເອງວ່າ  ນີ້ມັນເປັນໄປໄດ້ບໍ່ທີ່ຈະມີວຽງປະພາຄົນທີສອງ
ທີ່ບໍ່ຕ່າງຫຍັງກັບວຽງປະພາຄົນແຣກທີ່ເຂົາຈຳຕ້ອງຕັດໃຈຈາກມາອີກ?
ດ້ວຍຄວາມສົນໃຈທີ່ຢາກໃຝ່ຮູ້ຊອກຫາຄວາມຈິງດັ່ງກ່າວ  ອິສຣະຈຶ່ງປັກໃຈວ່າ
ຫາກວ່ານີ້ເປັນເລື້ອງຂອງໂຊກຊະຕາທີ່ຢາກຈະຫລິ້ນຕລົກກັບຊີວິດຂອງເຂົາອີກ
ກໍຂໍໃຫ້ເຂົາແລະນາງຄົນໃຫມ່ນີ້ວຽນມາພົບພໍ້ກັນອີກຄັ້ງ

ດ້ວຍວ່າອິສຣະເປັນຊາຍຫນຸ່ມທີ່ຈັດໄດ້ວ່າເນື້ອຫອມ  ເພາະຫາກໍມາຈາກຕ່າງປະເທດໃຫມ່ໆ
ບໍ່ພໍເຂົາຍັງມີຫນ້າຕາທີ່ໃຜເອົາໄປເປັນລູກເຂີຍກໍບໍ່ມີໃຫ້ອາຍເພື່ອນບ້ານໄດ້
ນີ້ຍັງບໍ່ເວົ້າເຖິງປຣິນຍາບັດທີ່ເຂົາໄດ້ມາອີກ  ພວກແມ່ສີ່ທັງຫລາຍຈຶ່ງຫ້ອມລ້ອມເຂົາ
ດັ່ງກັບວ່າເຂົາເອງເປັນລູກໃນໄສ້ຂອງຕົນເອງ
ແລະໃນຂະນະດຽວກັນລູກເຕົ້າເລົາກໍ່ຂອງທ່ານເຫລົ່ານັ້ນຊຶ່ງຕ່າງກໍມີຫນ້າຕາຈຸ່ມຈິ່ມ
ລ້ວນຖືກນຳມາສເນີຕໍ່ເຂົາ  ດັ່ງນຶ່ງວ່າເປັນສິນຄ້າຂອງຂາຍກັນໃນຕລາດ

ບາງທີຈະເປັນຍ້ອນຄວາມຈໍແຈຂອງຜູ່ຄົນທີ່ມາອ້ອມລ້ອມຕົວເຂົາ
ແລະກໍຈາກຄວາມເທົ່າທ່າຂອງສາວນ້ອຍທັງຫລາຍທີ່ພໍ່ແມ່ທັງຫລາຍສເນີຫນ້າໃຫ້
ນາງຄົນນັ້ນທີ່ຄັບຄ້າຍຄັບຄາວຽງປະພາກໍອົດຈະທີ່ແນມມາທາງເຈົ້າຫນຸ່ມເນື້ອຫອມຄົນໃຫມ່ບໍ່ໄດ້
ນາງບອກກັບຕົນເອງວ່າ  ຫາກເຂົາບໍ່ມີໃນຕາທີ່ແຝງຄວາມເສົ້າປະປົນເລິກໆແລ້ວ
ເຂົາກໍຄົງຈະເຫມືອນຊາຍຫນຸ່ມຄົນອື່ນໆທີ່ນາງເຫັນແລ້ວ  ກໍລະສາຍຕາຖິ້ມໃນທັນໃດ

ແຕ່ກັບເຂົາຄົນນີ້ ມັນຊ່າງແປກ ດວງຕາທີ່ເຖິງນາງຈະບໍ່ເຫັນຢ່າງເຊີງຫນ້າເຊີງຕາ
ນາງກໍອົດສະທ້ານໄປເຖິງຂົ້ວຫົວໃຈວ່າ ນັ້ນເປັນດວງຕາທີ່ມີມົນຂັງ ທີ່ມີພະລັງ ແລະທີ່…
ນາງບໍ່ຢາກຈະຄິດເຊັ່ນນັ້ນ ເພາະຄົນແບບນີ້ໃນໂລກນີ້ຄົງບໍ່ມີເປັນແນ່ແທ້

"ວອນ! ເຮົາໄປກັນເຖາະ ເຫັນບ່າວເມືອງນອກຄົນນັ້ນແລ້ວຫມັ້ນໄສ້"
ນາງຄົນນຶ່ງຊຶ່ງຄົງເປັນຫມູ່ຄູ່ສນິດຂອງນາງທີ່ຄັບຄ້າຍຄັບຄາວຽງປະພາເອີ່ຍຂຶ້ນ
ຈາກຖ້ອຍຄຳພາສາແລະສຳນຽງທີ່ໃຊ້ຊຶ່ງຄົນໄທຫາກມາໄດ້ຍິນແລ້ວ ກໍຄົງຈະອົດຍິ້ມເຍາະບໍ່ໄດ້
ນາງຄົນນັ້ນທີ່ມີຊື່ວ່າ "ວອນ" ກໍຫຍັບຍ້າຍເອົາຕົວອອກໄປຈາກສນາມບິນໄປ
ອິສຣະຊຶ່ງຖືກຄຸມແຈຢູ່ນັ້ນ ພໍມີໂອກາດຫລຽວໄປທາງອື່ນແດ່
ກໍພຽງທັນແຕ່ໄດ້ເຫັນຫລັງຂອງນາງທີ່ພວມຈະຫວິດປະຕູໃຫຍ່ທີ່ຂີດກັ້ນສນາມບິນວັດໄຕ
ແລະຕົວເມືອງວຽງຈັນນັ້ນ

ອິສຣະຍອມຮັບວ່າ ຍິງສາວທີ່ຫມູ່ຂອງນາງເອີ້ນວ່າ "ວອນ" ນີ້
ຊ່າງຄ້າຍຄືງວຽງປະພາແມ້ນແຕ່ພຽງຂ້າງຫລັງ
ອີກຢ່າງຜົມທີ່ຍາວສລວຍຂອງນາງຄົນນີ້ກໍຊ່າງເປັນຕອນດຽວກັບຜົມຂອງວຽງປະພາ
ບໍ່ພໍການແຕ່ງກາຍຂອງນາງທີ່ເຖິງນາງຈະຢູ່ໃນຊຸດລາວອັນມີສິ່ນເປັນຕົ້ນ
ກໍເຮັດໃຫ້ເຂົາອົດປຽບທຽບກັບວຽງປະພາບໍ່ໄດ້
ໂດຍສະເພາະກໍແມ່ນຕອນທີ່ນາງນຸ່ງສິ່ນໄປຕັກບາດຢູ່ວັດ ຊຶ່ງຖ້າຈະສລຸບແລ້ວກໍແມ່ນວ່າ
ບໍ່ວ່າສາຍຕາຂອງເຂົາຈະເຫັນນາງຄົນນີ້ຢູ່ໃນຮູບແບບຊຶງໃດ
ນາງກໍຍັງເປັນພາບຈຳລອງຂອງວຽງປະພາຂອງເຂົາດີໆນັ້ນເອງ

ທັງຫມົດນີ້ເຮັດໃຫ້ອິສຣະຕ້ອງງຸນງົງທົນຫວຍແລະກໍອີ່ມໃຈເປັນອາດໃດວາດນຶ່ງ
ເຂົາບອກກັບຕົວເອງອີກຄັ້ງວ່າ ຫາກຊີວິດນີ້ເຂົາຈະຕ້ອງໄດ້ຢູ່ຫ່າງໄກຈາກວຽງປະພາຕົວຈິງ
ຢ່າງຫນ້ອຍກໍຂໍໃຫ້ເຂົາໄດ້ເຕືອນຄວາມຊົງຈຳຂອງເຂົາທີ່ມີຕໍ່ນາງໃນຍິງສາວຄົນໃຫມ່ນີ້ດ້ວຍ
ຫລັງຈາກຄິດໄດ້ເຊັ່ນວ່າ ເຂົາກໍເອົາຕົວອອກໄປສູ່ຂ້າງນອກ ສູ່ຊີວິດຈິງຂອງຄົນກັບບ້ານໃຫມ່
ແລະສູ່ອະນາຄົດທີ່ບໍ່ມີໃຜອາດຈະຮູ້ກະຕວງລ່ວງຫນ້ານັ້ນໄດ້

## ໙. ຄວາມຝັນກັບຄວາມເປັນຈິງ



ເມືອງລາວໃນວັນນີ້ ຊຶ່ງຖ້າຈະເວົ້າໃຫ້ຖືກແລ້ວກໍແມ່ນວ່າ ວຽງຈັນໃນວັນນີ້ມີການປ່ຽນແປງຫລາຍ
ອິສຣະຜູ່ຊຶ່ງນັ່ງເບິ່ງຜູ່ຄົນຈໍແຈໄປມາໃນທ້ອງຖນົນຫລວງທີ່ປູຢາງຢ່າງດີຢູ່ຫນ້າບ້ານຈື່ໄດ້ວ່າ
ຕອນເຂົາຍັງຢູ່ນັ້ນບ້ານເມືອງແມ່ນຊຸບເຊົາ ອາດຈະເປັນຍ້ອນວ່າເສຖກິດທີ່ຖືກຄໍ້າຈູນ
ຈາກເງິນຊ່ອຍເຫລືອຂອງອະເມຣິກາແມ່ນໄດ້ຖືກຫ່ຽວແຫ້ງຫົດຫາຍໄປ
ໃນຂະນະທີ່ເສຖກິດຂອງສັງຄົມນິຍົມທີ່ຕ່າງກໍຫວັງຫນັກຫວັງຫນາວ່າສຸດແສນດີເລີດນັ້ນ
ແມ່ນຍັງຢູ່ໄກຈາກຄວາມເປັນຈິງຫລາຍ
ດັ່ງນັ້ນຈຶ່ງບໍ່ແປກທີ່ຈະເຫັນແຕ່ຮ້ານຄ້າແປນເປົ່າໄປຈາກຂອງຂາຍ
ຜູ່ຄົນຕ້ອງໄດ້ປູກຜັກປູກຫຍ້າເອງ ແຕ່ປານນັ້ນກໍຍັງບໍ່ໄດ້ກິນໄດ້ຢູ່
ສ່ວນເງິນນໍ້າເງິນເດືອນນັ້ນແມ່ນບໍ່ພໍແຈ່ວ ຊື້ໄດ້ເຂົ້າເປົາດຽວກໍກ້ຽງຫມົດຖົງແລ້ວ ຍັງໄຄແຕ່ວ່າ
ລຸງປ້າທີ່ອິສຣະມາອາໃສຢູ່ນໍານັ້ນເປັນຊາວໄຮ່ຊາວນາ
ຄວາມຂາດເຂີນແລະຂັດສົນຂອງໃນເມືອງຈຶ່ງບໍ່ຄ່ອຍມີຜົນກະທົບກະເທືອນເຖິງການຢູ່ກິນປານໃດ
ແຕ່ປານນັ້ນແຕ່ລະມື້ແຕ່ລະເວັນທີ່ຜ່ານໄປ
ຜູ່ຄົນທີ່ຄຸ້ນເຄີຍແລະລື້ງແກ່ວນກໍທະຍອຍກັນຫາຍຫນ້າຫາຍຕາຈາກບ້ານນາໄປຫມົດ
ໄດ້ຍິນວ່າບາງຄົນກໍໄປຫາກິນໃນເມືອງເພາະຊ່າວ່າມີທາງຫາລັດຫາລວຍໄດ້ຫລາຍ
ແລະໃນຂະນະດຽວກັນກໍໄດ້ຍິນວ່າ ມີຈໍານວນບໍ່ຫນ້ອຍໄດ້ເອົາຕົວຫລົບໂຕນຫນີຂ້າມຝັ່ງໄປຫມົດ

ອິສຣະເອງຕອນນັ້ນພຽງຂຶ້ນບ່າວໃຫມ່ແລະກໍຍັງເຂົ້າໂຮງຮຽນມັທຍົມຕອນຕົ້ນຢູ່
ເລື້ອງຄວາມຫຍຸ້ງຍາກຂັດສົນຊໍ້ານີ້ ເຂົາຈຶ່ງພໍສູ້ຊົນໄດ້ ອີກຢ່າງກໍແມ່ນວ່າ
ມັນກໍຄືມ່ວນຊື່ນວາດໃດວາດນຶ່ງທີ່ແຕ່ລະທິດກໍຕ້ອງໄດ້ໄປອອກແຮງງານ ບໍ່ວ່າຂຸດຫນອງປາ
ຂຸດຄຸກັ້ນນໍ້າ ຫລືບໍ່ຊັ້ນກໍເຮັດສວນຂອງທັງໂຮງຮຽນແລະຂອງທັງຫມູ່ບ້ານ

ຈົນວ່າມືຂອງເຂົາແດງໂພງເປັນປູດເປັນປານຫມົດ ແຕ່ໃນຂະນະດຽວກັນ
ໃນເວລາທີ່ເຂົາພໍມີເວລາໄດ້ຄິດແລະໄຕ່ຕອງຂຶ້ນມາ
ເຂົາກໍອົດເປັນຫ່ວງອະນາຄົດຂອງຕົນເອງບໍ່ໄດ້
ເພາະເທົ່າໆທີ່ເຫັນອັນເວລາຮ່ຳເວລາຮຽນນັ້ນເກືອບວ່າຈະບໍ່ມີ ຊຶ່ງຖ້າເປັນເຊັ່ນນີ້ແລ້ວເຮັດຈັ່ງໃດ
ເຂົາຈຶ່ງຈະເປັນຄົນມີຄວາມຮູ້ຄວາມຫລັກຂຶ້ນມາໄດ້?

ອັນເລື້ອງການປະຕິວັດເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວທຸກຖ້ວນຫນ້ານີ້
ອິສຣະແມ່ນເຫັນພ້ອມແລະຖວາຍຈິດຖວາຍໃຈໃຫ້ໄດ້ສເມີ
ເຂົາຄິດຕາມປະສາຂອງຫນຸ່ມນ້ອຍທີ່ຍັງໄຮ້ດຽງສາວ່າ ອັນແຜ່ນດິນລາວນີ້ກ້ວາງໃຫຍ່ໄພ່ສານ
ຢ່າງຫນ້ອຍກໍຕາມທີ່ຄູບອກສອນມາ ແລ້ວເປັນຫຍັງປະຊາຊົນເຮົາພຽງສາມລ້ານນີ້
ຈຶ່ງຈະບໍ່ຢູ່ທາງຫາຢູ່ຫາກິນ ຫລືທຳມາຄ້າຂາຍຈົນຮ່ຳຈົນຮອຍໄດ້?
ອີກຢ່າງພໍ່ຜູ່ບັງເກີດເກົ້າຕອນຄັ້ງເພິ່ນຍັງມີຊີວິດຢູ່ກໍເຄີຍບອກຢ້ຳເຕືອນວ່າ
ອັນຜືນແຜ່ນດິນນີ້ເປັນຂອງຄົນລາວເຮົາທຸກຄົນ
ຄວນທີ່ເຮົາຈະທຳຕົວໃຫ້ສົມກັບຜູ່ເປັນເຈົ້າຂອງແຜ່ນດິນທີ່ບັນພະບຸຣຸດຜູ່ພິລາດອາດຫານ
ໄດ້ສືບທອດມາໃຫ້ເຮົາດ້ວຍຢາດເລືອດ ນ້ຳຕາ ແລະແມ້ນກະທັ່ງຊີວິດຂອງພວກທ່ານທັງຫລາຍ

ແຕ່ມັນກໍຍັງມີສິ່ງນຶ່ງທີ່ອິສຣະບໍ່ອາດຫມົດອົກຫມົດໃຈກັບລະບອບການປົກຄອງໃຫມ່ໄດ້
ສິ່ງນັ້ນກໍມີວ່າ ຖ້າການປະຕິວັດນີ້ແມ່ນເພື່ອປະຊາຊົນລາວຢ່າງແທ້ຈິງ
ເປັນຫຍັງຈຶ່ງມີການແບ່ງວ່າຄົນເຈົ້າຄົນຂ້ອຍ? ຫລືວ່າການປະຕິວັດນີ້ເພື່ອຄົນກຸ່ມນຶ່ງຊື່ໆ?
ແຕ່ເຂົາກໍບໍ່ອາດຄິດໄປເຖິງຂນາດນັ້ນໄດ້
ເພາະຢ່າງຫນ້ອຍການທີ່ເຂົາຍັງໄດ້ມີໂອກາດເຂົ້າໂຮງຮຽນນີ້ກໍເປັນສັກຂີພະຍານວ່າ
ລະບອບໃຫມ່ນີ້ເບິ່ງຄືດີກ່ວາລະບອບເກົ່າເປັນແນ່ແທ້

ພວກພີ່ນ້ອງລຸງປ້າທັງຫລາຍທີ່ເຫັນເຂົາມັກນັ່ງຄິດເມີ່ລອຍເປັນປະຈຳ
ຕ່າງກໍອົດເປັນຫ່ວງແລະບອກເຕືອນວ່າ ຢ່າໄປຄິດໃຫ້ມັນຫຍຸ້ງສມອງຫຍັງຫລາຍ
ເພິ່ນໃຫ້ເຮັດຫຍັງ ກໍເຮັດໄປ ແລ້ວທຸກສິ່ງຢ່າງຫາກຈະດີຂຶ້ນເອງ ອິສຣະກໍຢາກຈະເປັນແນວນັ້ນຢູ່
ແຕ່ດ້ວຍສັນຊາດສະຍານຂອງຄົນທີ່ຮັກໃນຄວາມຍຸຕິທັມ ແລະທີ່ຮັກໃນຄວາມເປັນຕົວຂອງຕົວເອງ
ເຂົາຈຶ່ງອົດບໍ່ໄດ້ທີ່ຈະຊອກແຊກຫາຄຳຕອບໃນສິ່ງທີ່ຕົນຖືວ່າ
ມັນເປັນໄປຄົນລະຢ່າງກັບສິ່ງທີ່ເຂົາໄດ້ຍິນໄດ້ຟັງມານັ້ນ ແລະກໍຈາກຈຸດນີ້ເອງທີ່ໃນທີ່ສຸດ

ເຂົາກໍຕ້ອງໄດ້ມາພັດພາກຈາກບ້ານເມືອງໄປ
ຊຶ່ງນັ້ນບໍ່ແມ່ນຄວາມຄຽດຊັງຫລືຄວາມເປັນປໍຣະປັກຕໍ່ຜູ້ໃດໆທັງສິ້ນ

ຄິດມາຮອດນີ້ ອິສຣະກໍລຸກຂຶ້ນ
ດູດເອົາເຢືອກນຶ່ງຂອງອາກາດເມືອງລາວເຂົ້າໄປສູ່ປອດລົມຂອງຕົນ ອີກບໍ່ພໍເທົ່າໃດຊົ່ວໂມງ
ເຂົາກໍຈະເຂົ້າໄປສເນີຕົວກັບອະທິບໍດີກົມໄຟຟ້າເພື່ອຈະໄດ້ຮັບໃຊ້ປະເທດຊາດ
ສົມກັບທີ່ຄວາມຮູ້ທີ່ຕົນໄດ້ອຸດສາຮ່ຳຮຽນມາ ລຸງໂຊດບອກຢ້ຳເຕືອນສເມີວ່າ
ການເຂົ້າໄປຫາຜູ້ໃຫຍ່ນັ້ນໃຫ້ຮູ້ຈັກຖ່ອມຕົວ ເຖິງຕົນຈະມີຄວາມຮູ້ສູງປານໃດ ກໍໃຫ້ກົດເອົາໄວ້
ເພາະບາງເມືອງເຮົາຍັງຖືກຽດສັກສີ ຫລູ່ລົມບ່ອນເຂົ້າບ່ອນອອກ
ກ່ວາຄວາມຮູ້ຄວາມສາມາດຢ່າງໂດດໆເທົ່ານັ້ນ ອິສຣະກໍບອກຄືນໄປວ່າ
ອັນເຂົານີ້ມີຄວາມເຄົາລົບຜູ້ໃຫຍ່ໄມ້ສູງຢູ່ແລ້ວໂດຍສະເພາະກໍແມ່ນຜູ້ຄົນທີ່ທຳຕົວໃຫ້ເປັນທີ່ຮັກນັບ
ຖື ດັ່ງນັ້ນຫາກບ້ານເມືອງທີ່ເຂົາຮັກເປັນຊີວິດຈິດໃຈນີ້
ບໍ່ຜິດແປກຈາກອຸດົມການທີ່ເຂົາເຊີດຊູແລະບູຊາ ມັນກໍຈະບໍ່ມີບັນຫາໃດໆທັງສິ້ນ

-----------------------------------------------------------------.

ກ່ວາເຄິ່ງປີນັບເຂົ້າໄດ້ທີ່ອິສຣະມາປະຈຳການທີ່ເຂື່ອນນ້ຳງື່ມ ບາງຄັ້ງເຂົາກໍອົດຖາມຕົນເອງບໍ່ໄດ້ວ່າ
ເຂົາມາເຮັດຫຍັງຢູ່ທີ່ນີ້ ເປັນຫຍັງເຂົາຈຶ່ງບໍ່ຖືກສົ່ງໃຫ້ໄປປະຈຳການຢູ່ເຂື່ອນນ້ຳເທີນ
ບ່ອນທີ່ກຳລັງມີການສ້າງເຂື່ອນຢູ່ນັ້ນ ເຂົາເອງບໍ່ຢາກຕິວ່າ
ນັກວິສະວະກອນໄຟຟ້າຜູ້ທີ່ບໍ່ຮູ້ອີໂນ່ກ່ຽວກັບເລື້ອງນີ້ປານໃດ ກັບໄດ້ຮັບມອບຫມາຍຫນ້າທີ່ທີ່ສຳຄັນ
ແລະທີ່ຕ້ອງໄດ້ພົວພັນກັບອົງການຊ່ອຍເຫລືອຂອງຕ່າງປະເທດຢ່າງເປັນປະຈຳ
ໃນຂະນະທີ່ເຂົາເອງກັບຕ້ອງມານັ່ງເຮັດວຽກທີ່ມີແຕ່ເຈັ້ຽແຕ່ສໍຖ້ວມຫນ້າ
ປານກັບວ່າເຂົາເປັນພຽງເລຂານຸການກໍບໍ່ປານ

ອິສຣະບອກຕົວເອງວ່າ ອັນເລື້ອງເງິນເດືອນທີ່ໄດ້ບໍ່ເຖິງນຶ່ງທີ່ບໍ່ພໍແຈ່ວ
ເມື່ອທຽບໃສ່ກັບທີ່ເຂົາໄດ້ຮັບຕອນຍັງເຮັດວຽກຢູ່ກັບບໍຣິສັດໃຫຍ່ໆໃນອະເມຣິການັ້ນ ເຂົາພໍທົນໄດ້ຢູ່
ເພາະເຂົາເອງແມ່ນເຂົ້າໃຈດີເຖິງສະພາບບ້ານເມືອງຂອງຕົນທີ່ດ້ອຍກຳລັງຊັບ
ແຕ່ສິ່ງທີ່ເຂົາທົນບໍ່ຄ່ອຍໄດ້ກໍຄື
ເຂົາບໍ່ມີໂອກາດທີ່ຈະໄດ້ສຸ່ມໃຊ້ຄວາມຮູ້ຄວາມສາມາດຂອງຕົນໃຫ້ໄດ້ຢ່າງເຕັມທີ່
ຊຶ່ງນັ້ນມັນກັດກິນຫົວໃຈຂອງເຂົາຍິ່ງຫນັກ ກໍຄືຢ່າງວ່າແລ້ວ
ການມີອຸດົມການມັນປຽບເຫມືອນມີດສອງຄົມ ເມື່ອມັນໄດ້ເຮັດດັ່ງໃຈສົມຄວາມມຸ່ງມາດປາຖນາ

ມັນກໍມີຄວາມສຸກ ເຖິງແມ້ນວ່າຄວາມສຸກນັ້ນຈະໄດ້ມາດ້ວຍທຸກຢາດເຫື່ອຂອງຕົນກໍຕາມ
ແຕ່ໃນຂະນະດຽວກັນ ເມື່ອມັນຕ້ອງຖືກຄຸມຂັງທີ່ເຖິງຈະບໍ່ເປັນກົງຂັງກໍຕາມ
ມັນກໍກາຍເປັນຄວາມເຈັບປວດຮວດຮ້າວກ່ວາການເອົາມີດມາເຊືອດແທງເປັນຕັ້ງເທົ່າໃດໆ
ເພາະຢ່າງຫນ້ອຍບາດແຜຂອງຮອຍເລືອດນັ້ນຍັງມີວັນຫາຍໄດ້
ແຕ່ບາດແຜທີ່ເຊືອດແທງຫົວໃຈຂອງນັກອຸດົມການ ມັນເຈັບແລະແສບເກີນກ່ວາຈະຄາດຄະເນໄດ້

ຫລືວ່າທັງຫມົດນີ້ເປັນຍ້ອນພຽງຄົນໆນຶ່ງທີ່ບັງເອີນມີສິດບົ່ງການໂຊກຊະຕາຊີວິດຂອງເຂົາໃນຊ່ວງນີ້
ເທົ່ານັ້ນ? ຊຶ່ງນັ້ນກໍຫມາຍຄວາມວ່າ ອັນລະບອບໃຫມ່ນີ້
ອັນອຸດົມການທີ່ກະຊິດແຫນ້ນກັບລະບອບໃຫມ່ນີ້ຍັງຄົງສູງສົ່ງງົດງາມຢູ່ສເມີ?
ບາງທີວັນນຶ່ງເມື່ອທາງຂັ້ນສູງເຫັນໄດ້ເຖິງການເສັຽສລະຂອງເຂົາແລ້ວ
ເຂົາອາດຈະໄດ້ມອບຫມາຍຫນ້າທີ່ທີ່ສົມກັບຄວາມຮູ້ຄວາມສາມາດອັນແທ້ຈິງຂອງເຂົາໃນທີ່ສຸດ

ໃນຂະນະທີ່ສາຍຕາຂອງອິສຣະແລມອງໄປຍັງເຂື່ອນນ້ຳງື່ມຢູ່ນັ້ນ
ເຂົາກໍປະໃຫ້ຄວາມຄິດລ່ອງລອຍໄປສູ່ຄັ້ງແຣກທີ່ເຂົາໄດ້ພົບກັບທ່ານອະທິບໍດີ
ຜູ່ຊຶ່ງວ່າທາງກົມນີ້ມີພະນັກງານທີ່ມີຄຸນວຸດທິພຽງພໍແລ້ວ
ແຕ່ເພື່ອເຫັນແກ່ເຂົາທີ່ອຸດສາຕັ້ງໃຈກັບມາສ້າງສາບ້ານເກີດເມືອງນອນຊ່ອຍໆກັນ
ທາງກະຊວງຈຶ່ງໃຫ້ເຂົາໄປປະຈຳການຢູ່ເຂື່ອນນ້ຳງື່ມໃນຖານະຜູ່ຊ່ອຍວິສະວະກອນ
ຮັບຫນ້າທີ່ແລ່ນວຽກແລ່ນສໍ ນອກນັ້ນທ່ານອະທິບໍດີຍັງບອກອີກວ່າ
ຫາກເຂົາທຳຕົວໃຫ້ເປັນທີ່ໄວ້ວາງໃຈໄດ້
ທາງກະຊວງຈະມີຮັບສັ່ງໃຫ້ເຂົາໄດ້ກິນຕຳແຫນ່ງວິສະວະກອນໃນທີ່ສຸດ



ເຂົາຈື່ໄດ້ວ່າ ເຂົາເຝົ້າບອກຕົວເອງຢູ່ບໍ່ແລ້ວວ່າ
ນີ້ບໍ່ແມ່ນສະຫະລັດອະເມຣິກາທີ່ຖືຄຸນວຸດທິຂອງແຕ່ລະຄົນເປັນຫລັກ
ແລະນີ້ຍັງແມ່ນເມືອງລາວທີ່ຕ້ອງໃຊ້ເວລາດົນກ່ວາມາຕຖານສາກົນຈະເປັນທີ່ປະຕິບັດກັນໄດ້
ດັ່ງນັ້ນການທີ່ເຂົາມີລ້ານິການຮັບໃຊ້ລັດໂດຍກົງນີ້ກໍນັບວ່າດີປະເສີດແລ້ວ
ເພາະໄດ້ຍິນວ່າມີຜູ່ຈົບການສຶກສາຊັ້ນສູງຫລາຍໆຄົນພາກັນເຕະຂີ້ຝຸ່ນຕາມທ້ອງຖນົນຫລວງກໍບໍ່ແມ່
ນຂອງຫນ້ອຍ ນີ້ຫາກເຂົາພິສູດໃຫ້ທາງຂັ້ນສູງເຫັນວ່າ ອັນຕົວເຂົານີ້ເປັນທອງຄຳແທ້
ວັນນຶ່ງມັນກໍຄົງຈະໄດ້ມີໂອກາດໃສແວວວາວຢ່າງຫລີກລ້ຽງບໍ່ໄດ້

ແລະໃນສ່ວນເລິກຂອງຫົວໃຈເຂົານັ້ນ ເຂົາກໍອົດບໍ່ໄດ້ທີ່ຈະຄິດເຖິງວຽງປະພາ
ປານນີ້ນາງຈະຍັງຄິດເຖິງເຂົາຢູ່ບໍ່ນໍ? ກາລເວລາແລະຄວາມຫ່າງເຫີນຢ່າງບໍ່ຮູ້ແນ່ແທ້ວ່າ
ຈະມີວັນໃດຈະໄດ້ຫ່ວນຢ່ອນຄືນມາພົບກັນອີກ ຄົງຈະເຮັດໃຫ້ນາງຫລົງລືມເຂົາໄດ້ໃນທີ່ສຸດ
ຫລືບໍ່ຊັ້ນແຈຣີກໍຄົງຈະເຂົ້າມາແທນຕົວເຂົາຈົນນາງບໍ່ອາດຈະມີເວລາຫລົງເຫລືອໃຫ້ເຂົາ
ແມ້ນແຕ່ຄວາມຄິດຮອດຄິດເຖິງທີ່ພຽງນ້ອຍນິດ



ແລະໃນແວບນຶ່ງຂອງຄວາມຄິດທີ່ໄຫວຫວັ່ນນັ້ນ
ພາບຂອງຍິງສາວທີ່ຄ້າຍຄືງກັບວຽງປະພາກໍປະກົດຂຶ້ນໃນມະໂນພາບຂອງເຂົາ ...ດວງຕາຄູ່ນັ້ນ

...ເຮືອນຜົມທີ່ຍາວສລວຍສະດຸດຕານັ້ນ ...ແລະກຳນາມທີ່ຫມູ່ຂອງນາງຮຽກຂານນັ້ນ ມັນຊ່າງເວົ້າວອນຄວາມເປັນຊາຍຂອງເຂົາຢ່າງສຸດທີ່ຂະນາ ...ວອນ...

## ໔. ວອນວິໄລ ໄສໄລຂອງລາວໃຫມ່

ນະທີ່ອ່າງນ້ຳງື່ມ...



"ເຮີ້ຍວອນ! ໂຕກະສູກະດັດກະດົ້ຫລາຍແມ່ ມາຫລີ້ນອ່າງນ້ຳງື່ມທັງເທື່ອກະຍັງບໍ່ຍອມລົງອາບນຳຫມູ່"
ສຽງແຈ່ວໆຂອງມະນີດັງຂຶ້ນ ເພາະນາງທົນຄຳຫມັ້ນ ຊາຍຫນຸ່ມຜູ່ມີໃຈໃຫ້ເພື່ອນຍິງຂອງນາງ ຈີ້ນາງໃຫ້ຊັກຊວນເອົາວອນລົງມາອາບນ້ຳ ໃຫ້ໄດ້ຢູ່ບໍ່ແລ້ວຈັກເທື່ອ ວ່າກັນວ່າ ວອນວິໄລ ຫລືທີ່ຫມູ່ຄູ່ຕ່າງກໍເອີ້ນນາງພຽງສັ້ນໆວ່າ ວອນ ນັ້ນ ຊ່າງຫົ່ມເນື້ອຫົ່ມຕົວຢ່າງມິດຊິດ ຫນ້ອຍເທື່ອຫນັກທີ່ຫມູ່ຄູ່ຈະເຫັນນາງໃສ່ສົ້ງຂາສັ້ນ ຊຶ່ງຖ້ານາງຈະໃສ່ກໍພຽງໃສ່ແຕ່ໃນເຮືອນ ບໍ່ທ່ອນອອກໄປເກ້ກ້າງໃຫ້ໃຜເຫັນຢູ່ຂ້າງນອກຈັກເທື່ອ ດັ່ງນັ້ນຈຶ່ງເປັນອັນວ່າ ອັນຜູ່ບ່າວຜູ່ແຜ່ວທີ່ຫຽວຕອມຕົ້ນາງນັ້ນແມ່ນວ່າ ບໍ່ມີໂອກາດໄດ້ເຫັນຂາຂາວຂອງນາງຈັກເທື່ອ ຄຳຫມັ້ນເອງເມື່ອໄດ້ຍິນວ່າວອນກໍຈະໄປອ່າງນ້ຳງື່ມນຳ ກໍອົດທີ່ຈະຕື່ນເຕັ້ນບໍ່ໄດ້ ເຂົາອົດສາເອົາເງິນທີ່ໂຮມໄວ້ນັ້ນໄປຊື້ເອົາກ່ອງຖ່າຍຮູບເພື່ອເຫດການພິເສດອັນນີ້ເປັນສະເພາະ



“ຂໍຕົວກ່ອນເທາະເທື່ອນີ້ ເຮົາຕັ້ງລືມເອົາຊຸດອາບນໍ້າມາ” ວອນວິໄລຫາຂໍ້ອ້າງມາແກ້ຕົວ ອຸ່ຍ ຈະໃຫ້ນາງໄປໂຊຂາໃຫ້ຫນຸ່ມໆເບິ່ງນັ້ນ ຝັນໄປເຖີດ
“ສິງໃສຂາແປ໋ວລະຕິຈຶ່ງບໍ່ຢາກໂຊຂານຳຫມູ່” ມະນີກໍດັ່ງເຊັ່ນເຄີຍ ອົດຢອກລໍ້ເພື່ອນຄູ່ສນິດບໍ່ໄດ້ ຝ່າຍຄຳຫມັ້ນເມື່ອຕະຫນັກວ່ານາງໃນຝັນຂອງເຂົານັ້ນບໍ່ຫລີ້ນບໍ່ພຽງແຕ່ ຈະບໍ່ຍອມໃສ່ຊຸດອາບນໍ້າເທົ່ານັ້ນ ແຕ່ຍັງບໍ່ຍອມລົງອາບນໍ້າໃຫ້ເຂົາໄດ້ຊິດແນບອີກ ເຂົາກໍເລີຍຢ່ອງໆຂຶ້ນມາຝັ່ງ ແລະກໍຄ້ວາເອົາກ່ອງຖ່າຍອອກມາຈາກຖົງພາຍ ເພື່ອບັນຈົງທຸກອະຣິຍະບົດທີ່ຊ່າງວາບຫວານໃຈນັ້ນ

“ອຸ່ຍ ອ້າຍຄຳຫມັ້ນກະດາຍ ເຈົ້າກະຫລີ້ນເອົາຈົນຂ້ອຍອາຍນຽມໄປຫມົດ ແນວເຮັດໃດກໍຖ່າຍເອົາຫມົດ ຜູ່ອື່ນມາເຫັນເຂົ້າ ກະຊິວ່າເຈົ້າຕັ້ງຕາມາຖ່າຍຮູບຂ້ອຍຜູ່ດຽວຫມົດ” ວອນວິໄລອົດບໍ່ໄດ້ທີ່ຈະກ່າວຄຳດັ່ງກ່າວອອກມາ ເພາະຄຳຫມັ້ນຕັ້ງກ້ອງຖ່າຍຮູບນາງຢູ່ບໍ່ແລ້ວເປັນຈັກເທື່ອ
“ກໍດີ ຫມູ່ຄູ່ຊິໄດ້ຮູ້ຈັກເທື່ອວ່າ ຄຳຫມັ້ນຄົນນີ້ມີຫົວໃຈໄວ້ໃຫ້ແຕ່ວອນຜູ່ນຶ່ງຜູ່ດຽວ” ຄຳຫມັ້ນໄດ້ທ່າກໍຫລີ້ນລູກຈີບເອົານາງໃນຝັນຂອງເຂົາເລີຍ ວອນວິໄລເອງໄດ້ຍິນຄຳດັ່ງກ່າວຈາກເພດກົງກັນຂ້າມຈົນນັບວ່າຊິນຫູ ຈາກຊາຍຫນຸ່ມເອີຍ ຈາກຫນຸ່ມໃຫຍ່ເອີຍ ຫລືແມ້ນແຕ່ຈາກພວກທີ່ມີພັລຍາຢູ່ທັງຕົວເອີຍ ດັ່ງນັ້ນຈະໃຫ້ນາງໄປຫລົງຄາລົມຄົມຄາຍຂອງຄຳຫມັ້ນ ກໍສຸດຈະເຫລືອວິໄສ ແຕ່ກໍດ້ວຍຄວາມເປັນກຸລສະຕີຂອງນາງ ນາງຈຶ່ງບອກຂອບໃຈເຂົາໄປຕາມມາຣະຍາດທີ່ດີຊື່ໆ

ໃນຂະນະທີ່ການຕໍ່ລໍ້ຕໍ່ຄວາມຂອງຄູ່ຫນຸ່ມສາວກຳລັງດຳເນີນຕໍ່ໄປຢູ່ນັ້ນ ອິສຣະນັກວິສະວະກອນຫນຸ່ມເຮົາກໍບັງເອີນມາທ່ຽວຍ່າງຫລີ້ນເພື່ອຍືດເສັ້ນຍືດສາຍໃນບ່ອນອາບນໍ້ານັ້ນ ຕາມທັມມະດາເຂົາກໍບໍ່ຄ່ອຍສົນໃຈສະແງເບິ່ງຜູ່ມາອາບນໍ້າໃນອ່າງນໍ້າງື່ມເລີຍ

ເພາະອັນເລື້ອງຂາຂາວໆຂອງເພດກົງກັນຂ້າມນີ້
ເຂົາເຫັນຢູ່ຕາມຊາຍຫາດທ້ອງທະເລໃນອະເມຣິກາມາຈົນເມື່ອຍພິສວາດແລ້ວ
ອີກຢ່າງມັນບໍ່ພຽງເທື່ອນຶ່ງເທື່ອດຽວທີ່ມີເພດກົງກັນຂ້າມມາໃຫ້ທ້າຍເຂົາຈົນເຖິງເຮືອນເຖິງຊານ
ໃນຊຸດທີ່ຈະພາໃຫ້ຫົວໃຈຫລົ່ນປຸ່ບລົງໄດ້ໃນທຸກຍາມ ແຕ່ເຂົາກໍບອກໄປຢ່າງກົງໄປກົງມາວ່າ
(ເຂົາມີແຟນແລ້ວ ຢ່າງຫນ້ອຍກໍໃນອຸດົມການຂອງເຂົາ)
ແລະກໍບໍ່ເຄີຍຄິດທີ່ຈະມອບຫົວໃຈໃຫ້ແກ່ຍິງອື່ນໃດເລີຍ

ແຕ່ເຖິງຢ່າງໃດ ເຂົາກໍອົດລະແຄງໃຈໃນຕົວເອງບໍ່ໄດ້ວ່າ
ແລ້ວເປັນຫຍັງນາງຄົນນັ້ນຈຶ່ງເຫມືອນຈະເປັນພາບຊ້ອນພາບຂອງວຽງປະພາຢູ່ໃນຈິດຢູ່ໃນໃຈຂອງ
ເຂົາບໍ່ແລ້ວເປັນຈັກເທື່ອ ຫລືບາງທີຫາກເຂົາໄດ້ມີໂອກາດເຫັນນາງເຂົາຢ່າງຈັງໆຈັກຄັ້ງ
ຄວາມທີ່ວ່າຄ້າຍຄືງກັນນັ້ນຄົງຈະມະລາຍຫາຍໄປເອງ ແລະກໍຈາກຈຸດນີ້ເອງທີ່ພາໃຫ້ສາຍຕາເຂົາ
ເຝົ້າສະແງມອງເບິ່ງຍິງສາວທຸກຄົນທີ່ມາຫລິ້ນອ່າງນ້ຳງຶ່ມນີ້
ໂດຍຫວັງວ່າພາບທີ່ເຂົາໄດ້ເຫັນເປັນຄັ້ງແຣກທີສນາມບິນວັດໄຕນັ້ນ
ຈະຫ່ວນຍ່ອນກັບຄືນມາໃນຕົວຈິງອີກ

"ວອນ ເອົາຜ້າເຊັດຫນ້າມາໃຫ້ເຮົາແດ່ ນ້ຳພີສັງເຢັນສຽວຈັງເລີຍ" ມະນີທັງເອີ້ນຂຶ້ນມາແຕ່ນ້ຳ
ແລະກໍທັງແລ່ນປານຈຣວດຂຶ້ນມາ ອິສຣະຜູ່ຊຶ່ງຢ່າງບໍ່ໄກຈາກບ່ອນທັ້ນປານໃດ ທັນໄດ້ຍິນຄຳວ່າ
ວອນ ຫູຂອງເຂົາກໍຜຶ້ງຂຶ້ນໃນທັນໃດ
ແລະທັນທີສາຍຕາຂອງເຂົາແລໄປໃສ່ຈຸດຂອງສຽງທີ່ເດັ່ງໄປຫານັ້ນ
ສາຍຕາຂອງເຂົາກໍປະສານເຂົ້າຢ່າງຈັງກັບສາຍຕາຂອງນາງ
ຊຶ່ງຕອນນັ້ນນາງພວມຈະກຳລັງລຸກຂຶ້ນແລະເອົາຜ້າເຊັດຫນ້າໄປໃຫ້...

"ກະຫລິ້ນຖືຢູ່ຫັ້ນແຫລະ ຜູ່ຫນາວກໍຫນາວຈົນຈະຂາດໃຈຢູ່ແລ້ວ ຈ່ະ"
ມະນີຟ້າວດຶງເອົາຜ້າເຊັດຫນ້າຈາກມືຂອງວອນວິໄລອອກຢ່າງພວດພາດ
ພ້ອມທັງຫລັບຕາຊັ່ງໃສ່ທັງເພື່ອນຂອງນາງແລະຊາຍຫນຸ່ມ
ທີ່ເມື່ອນາງມາເຫັນເຂົາຢ່າງຈັງໆກໍເຖິງກັບອຸທານວ່າ ເທົ່າເປັນບ້າເລີຍ
ວອນວິໄລເອງກໍເຖິງຂັ້ນຕົກຕະລຶງທີ່ຢູ່ບໍ່ຊື່ ຊາຍຫນຸ່ມທີ່ຕິດຕາຕ້ອງໃຈນາງເມື່ອຊ່ອນເຄິ່ງປີກ່ອນນັ້ນ
ກັບມາປະກົດໂສມຕໍ່ຫນ້າຂອງນາງຢ່າງໃກ້ໆ ດັ່ງກັບວ່າລົມຫາຍໃຈຂອງເຂົານາງກໍອາດສັມຜັດໄດ້

ເພື່ອເປັນການແກ້ເກີ້ ອິສຣະຈຶ່ງຖືໂອກາດແນະນຳຊື່ສຽງລຽງນາມຂອງເຂົາເລີຍ
ວອນວິໄລເອງກໍເຮັດຕາມຢ່າງວ່າງ່າຍເຊັ່ນດຽວກັນ ນາງບອກກັບຕົນເອງວ່າ
ຊາຍຄົນນີ້ມີຫລາຍສິ່ງໃນຕົວເຂົາທີ່ບົ່ງບອກນາງວ່າ ຄວາມເປັນສຸພາບບຸຣຸດນັ້ນເປັນຈັ່ງໃດ?
ແລະເຫນືອສິ່ງອື່ນໃດຫມົດ ສເນ່ຂອງຊາຍຫນຸ່ມນັ້ນບໍ່ຈຳເປັນຈະຕ້ອງຢູ່ທີ່ຖ້ອຍຄາຣົມ
ແຕ່ຫາກຢູ່ທີ່ນ້ຳໃສໃຈຈິງທີ່ພຽງແວວຕາແລະນ້ຳສຽງກໍສາມາດບົ່ງບອກໄດ້

ສ່ວນອິສຣະ ພາບຂອງວອນວິໄລທີ່ຊ່າງມີຊີວິດຊີວາທີ່ຊ່ອຍປັດຖິ້ມທຸກຄວາມເສົ້າຫມອງ
ຕລອດເວລາຫົກເດືອນກ່ວາໆນີ້ ເຮັດໃຫ້ເຂົາເຖິງກັບຍິ້ມອອກຢ່າງມີຄວາມຫມາຍເປັນຄັ້ງແຮກ
ໃນຜືນແຜ່ນດິນແມ່ ວຽງປະພາ ວອນວິໄລ ສອງຍອດຍິງ
ສອງເພັດນ້ຳນຶ່ງຂອງເມືອງລາວຄືນລາວ ແລ້ວເຂົາລະຈະເດີນທາງໄປໃນທິດທາງໃດ
ສວັນເທົ່ານັ້ນຈະບອກໃຫ້ຮູ້ໄດ້

## ໕. ດອກໄມ້ຈູມມັ

ນັບແຕ່ວັນທີ່ວອນວິໄລໄດ້ມີໂອກາດໂອ້ລົມແລະເວົ້າຈາກັບອິສຣະເປັນຕົ້ນມາ ນາງກໍເລີ້ມຮູ້ສຶກວ່າ
ໃນຕົວຂອງນາງມີບາງສິ່ງບາງຢ່າງປ່ຽນໄປ
ອະຄະຕິທີ່ວ່າອັນເພດກົງກັນຂ້າມນັ້ນລ້ວນແລ້ວແຕ່ເປັນພວກທີ່ກະຫາຍຫິວດ້ວຍກັນທັງນັ້ນຊ່າງລົດ
ຜ່ອນຄວາມເຂັ້ມຂົ້ນຂອງມັນລົງ ຢ່າງຫນ້ອຍກໍສຳຫລັບອິສຣະຄົນນີ້
ນາງກ້າເວົ້າຢ່າງກົງໄປກົງມາວ່າ ນາງບໍ່ເຄີຍຮູ້ສຶກໄວ້ວາງໃຈຊາຍອື່ນໃດມາກ່ອນ
ແຕ່ກັບອິສຣະຄວາມຮູ້ສຶກດັ່ງກ່າວແມ່ນວ່າກໍ່ເປັນຮູບເປັນຮ່າງຂື້ນມາ
ດັ່ງກັບວ່າເຂົາເປັນຍອດເທພບຸດທີ່ຈະມີກໍພຽງໃນນິຍາຍຫລືໃນຄວາມຝັນເທົ່ານັ້ນ
ນີ້ຫາກຄົນທີ່ພໍ່ແມ່ຢາກໃຫ້ເປັນຝັ່ງເປັນຝານຳນັ້ນໄດ້ພຽງເຄິ່ງນຶ່ງຂອງເຂົາ
ນາງກໍພ້ອມທີ່ຈະລົງຫມໍ່ເຫາະມົກແຕ່ເຫີງດົນນານແລ້ວ
ຫລືວ່ານີ້ເປັນບຸບເພສັນນິວາດເຮັດໃຫ້ນາງຕ້ອງລໍຖ້າຄູ່ຄອງທີ່ແທ້ຈິງມາຕາບຈົນເທົ່າເຖິງທຸກວັນນີ້

ທຸກຄັ້ງທີ່ນາງຄິດເຖິງອິສຣະຂື້ນມາຍາມໃດ ນາງກໍພຽງແຕ່ຫວັງວ່າ
ໃຫ້ເຂົາມີຄວາມຄິດເຊັ່ນດຽວກັບນາງແມ້ນພຽງຈັກຫນ້ອຍນຶ່ງກໍພໍ ເພາະເຂົາຜູ່ເປັນນັກຮຽນນອກ
ມີປຣິນຍາ ມີອະນາຄົດທີ່ກ້ວາງໄກຂ້າງຫນ້າ
ມີບໍ່ທີ່ຈະມາຫລົງຮັກຫລົງປອງກັບຍິງສາວທີ່ເຂົາຫາກໍມາຮູ້ຈັກໄດ້?

ອີກຢ່າງນາງນີ້ກໍພຽງຈົບການສຶກສາຂັ້ນມັທຍົມຕອນປາຍ
ແຕ່ກໍບໍ່ມີໂອກາດໄດ້ໄປຮຽນຕໍ່ມະຫາວິທະຍາໄລຄືເພື່ອນຝູງ ມີບໍ່ທີ່ຈະໄປຄູ່ຄວນກັບເຂົາໄດ້?
ແລະເຫນືອສິ່ງອື່ນໃດຫມົດ ເຂົາຄົງຈະມີຄົນຮັກທີ່ເຂົາຫມັ້ນຫມາຍມາກ່ອນ
ແລ້ວເຫດໃດນາງຈະໄປບ້າບໍ່ບໍ່ເຂົ້າເລື້ອງໄດ້? ນີ້ລະນໍທີ່ເພິ່ນວ່າ ຄົນທີ່ເຂົາຮັກເຮົານັ້ນ
ເຮົາກັບບໍ່ຮັກເຂົາ ແຕ່ກັບຄົນທີ່ເຮົາຄິດຈະຮັກ ເຂົາກັບມີເຈົ້າຂອງເສັຽແລ້ວ

"ວອນ ໂຕກະຊ່າງເປັນ ເອີ້ນຢູ່ຈົນເມື່ອຍກໍຍັງບໍ່ຂານ ຫລືທໍາໄມ່ຮູ້ເຣື່ອງໄປດ້າຍ?"
ມະນີຜູ່ຊຶ່ງໄດ້ຜ່ານການສຶກສາຂັ້ນມະຫາວິທະຍາໄລ ແຕ່ກໍເກີດບໍ່ມັກຮຽນຂຶ້ນມາໃນທັນໃດ
ກໍເລີຍຖອນຕົວອອກຊື່ໆ ນາງໃຫ້ເຫດຜົນວ່າ ຈັກຊິຮຽນໄປຫຍັງ?
ຈົບມາແລ້ວກໍບໍ່ມີວຽກງານແນວທີ່ຮຽນນັ້ນໃຫ້ເຮັດ ແນມນໍ້າຫນ້າເອົາເວລານັ້ນໄປຫາເງິນດີກ່ວາ
"ແມ່ນຫຍັງກໍ້ ນີ? ເຮົາກໍາລັງຄິດຢູ່ວ່າ ວັນເກີດເຮົານີ້ ເຮົາຊິໄປຕັກບາດຢູ່ວັດ
ແລະຖ້າຈະໄປແທ້ ຈັກຈະຫາໃຜ ມາເຮັດວຽກແທນເຮົາໄດ້"
ວອນວິໄລຕອບອອກໄປເຄິ່ງຈິງເຄິ່ງຫລີກລັ້ງ ເພາະນາງກໍຄິດແນວນັ້ນມາກ່ອນອີຫລີ
ແຕ່ທີ່ຄິດຫວ່າງຫມໍ່ໆນີ້ ມີຫລືນາງຈະທ່ອນບອກມະນີໄດ້
"ບໍ່ຕ້ອງບອກ ເຮົາກໍຮູ້ແລ້ວວ່າ ອັນແນວທີ່ໂຕຄິດເຖິງນັ້ນແມ່ນຫຍັງ? ຫລືຊິເວົ້າໃຫ້ຖືກແມ່ນໃຜ?"
ມະນີຕາມສະໄຕລກໍອົດດາກດັນເພື່ອນຂອງຕົນທີ່ຢູ່ບໍ່ຊື່ກໍກາຍເປັນຄົນທີ່ເມີລອຍຂຶ້ນມາຢ່າງກັບວ່າ
ເປັນຄົນລະຄົນໄປແລ້ວ
"ໂຕກະຊ່າງເວົ້າຫາແນວມາເວົ້າ ເຮົານີ້ບໍ່ຕາຍໃຈໃຫ້ໃຜງ່າຍໆດອກ"
"ສົມພອນປາກເຖິດ ຢ່າໃຫ້ນໍ້າຕາເຊັດຫົວເຂົ່າກໍແລ້ວກັນ ຢ່າຫາວ່າສັນໄມ່ເຕືອນນະ"
ມະນີຜູ່ຊຶ່ງເຮັດວຽກເປັນສາວເສີຟຢູ່ຮ້ານອາຫານກິນດື່ມມາດົນ
ແລະກໍໄດ້ຍິນໄດ້ຟັງເພງໄທມາຈົນເວົ້າຄໍາໃດກໍເປັນໄທໄປຈົນອ໋ອດຕ໋ອດ
ອົດເຕືອນເພື່ອນຜູ່ທີ່ນາງຮັກຍິ່ງບໍ່ໄດ້
ແມ້ນວ່າທັງສອງຈະເຮັດວຽກໃນບ່ອນດຽວກັນແລະໄປໃສມາໃສນໍາກັນ ແຕ່ມະນີກໍຮູ້ດີວ່າ
ອັນນາງນັ້ນຖ້າປຽບໃສ່ວອນວິໄລ ນາງເປັນໄດ້ກໍພຽງພອຍ ສ່ວນເພື່ອນຂອງນາງນັ້ນເປັນເພັດແທ້
ແລະນາງກໍຕ້ອງການຢາກໃຫ້ເພື່ອນມີຄວາມສຸກ ບໍ່ຕ້ອງມາຖືກປະຖິ້ມດັ່ງຕົວຂອງນາງ

ແລະເມື່ອຄິດໄດ້ດັ່ງວ່າ ມະນີຜູ່ຊຶ່ງມີນໍ້າໃຈຮັກເພື່ອນເປັນທຶນເດີມຢູ່ແລ້ວກໍຂັນອາສາຂຶ້ນມາວ່າ
"ອີ໋ ຄັນໂຕຢາກໄປຕັກບາດມື້ວັນເກີດຂອງໂຕແທ້ໆ ເຮົາກໍຊິຂໍເຮັດແທນພັ້ງນຂອງໂຕໃຫ້
ແຕ່ຢ່າລືມໃດ່ວ່າ ອັນເຈົ້າຫນຸ່ມຄົນນັ້ນ ເຮົາເຈົ້າຂ້ອຍເຂົາບໍ່ມາຫລຽວແລດອກ ທາງທີ່ດີກໍແມ່ນວ່າ
ໃຫ້ລືມເຂົາສະ ເອະ ເວົ້າໄປເວົ້າມາ ເປັນຫຍັງໂຕບໍ່ໄປຕັກບາດກັບອ້າຍຄໍາຫມັ້ນ?

ເບິ່ງຊິ່ງລາວເອົາຈິງເອົາຈັງກັບໂຕແທ້ໃດ ນີ້ຖ້າລາວມາມັກເຮົາ
ລະແມ່ນວ່າເຮົາຕັດຫົວຕັດຕີນໃຫ້ໂລດ ອັນທີ່ຂ້າວ່າມານີ້ຖຸກໄຫມໄອ້ເພື່ອນເກີ?"

ວອນວິໄລໄດ້ຍິນແນວນັ້ນກໍຢາກບອກມະນີຢູ່ວ່າ
ນາງຈະໄປຕັກບາດຜູ່ດຽວຫລືບາງທີກັບອິສຣະຜູ່ຊຶ່ງຂຽນຈົດຫມາຍມາວ່າ
ເຂົາໄດ້ຂໍລາພັກການແລະຢາກຈະຂໍມາແວະກາຍທີ່ຢູ່ທີ່ເຊົ່າຂອງນາງ ໂດຍບໍ່ລືມລົງທ້າຍໄປວ່າ
ຫາກນັ້ນເປັນການເຫມາະສົມ ແຕ່ຈະບອກໄປກໍຈະມີປໂຍດຫຍັງ? ນາງຄິດວ່າ
ໃຫ້ນາງເປັນຜູ່ຕັດສິນອະນາຄົດຂອງນາງເອງດີກ່ວາ ອີກຢ່າງນາງກໍຢາກຮູ້ໃຫ້ເລິກແກ່ໃຈວ່າ
ເມື່ອເຂົາໄດ້ມາເຫັນເຄຫັງນ້ອຍທີ່ນາງເຊົ່າເຂົາຢູ່ ເຂົາຈະຄິດຢ່າງໃດ?



"ຂອບໃຈນໍາໂຕຫລາຍໆ ບຸນຄຸນຂອງໂຕນີ້ ຊົ່ວຊີວິດຂອງເຮົາຄົງຈະໃຊ້ບໍ່ຫມົດງ່າຍໆ"
ວອນວິໄລຜູ່ຊຶ່ງວ່າເກືອບໄຮ້ຍາດຂາດມິດໃນນະຄອນຫລວງນີ້
ກໍມີພຽງມະນີຄົນດຽວທີ່ເປັນເພື່ອນແທ້ ຊຶ່ງຫາກບໍ່ມີເພື່ອນແລ້ວ
ນາງກໍຄົງຫອບຜ້າຫອບຜ່ອນກັບໄປສູ່ເມືອງໂພນໂຮງແຕ່ດົນແລ້ວ ແລະກໍຍ້ອນເພື່ອນຄົນນີ້ຄົນດຽວ
ນາງຈຶ່ງມີວຽກງານເຮັດທີ່ຮ້ານກິນດື່ມແລະກໍພໍມີເງິນເຫລືອໃຫ້ໄດ້ສົ່ງເສັຽນ້ອງໆ
ໃຫ້ໄດ້ມີໂອກາດຮຽນຕໍ່ສູງໆ ຊຶ່ງນາງເອງບໍ່ອາດມີໂອກາດນັ້ນໄດ້

---



ນະທີ່ວັດສີເມືອງທີ່ແສນຈະສັກສິດ...

ມື້ນີ້ວອນວິໄລງາມເປັນພິເສດ  ບໍ່ຕ່າງຫຍັງກັບນາງຟ້າທີ່ລ່ອງລອຍລົງມາຈາກສວງສວັນ
ເສື້ອສີໄຂ່ທີ່ນາງສວມໃສ່ຊ່າງກົມກືນໄປກັບຜິວພັນທີ່ດຸດດັ່ງຍອງຝ້າຍຂອງນາງ
ແລະສິ່ນສີແດງນັ້ນກໍຊ່າງເຮັດໃຫ້ຜິວນວນຂອງນາງເປັ່ງປະກາຍ  ພາຍໃນອ້ອມແຂນຂອງນາງ



ຂັນໃບງາມຖືກບັນຈົງຖືຢ່າງແຊ່ມຊ້ອຍ
ແລະຍ່າງຢູ່ຄຽງຂ້າງນາງນັ້ນກໍບໍ່ແມ່ນໃຜອື່ນທີ່ນາງຢ
າກຈະໃຫ້ຢູ່ໃກ້  ເຂົາຄົນນັ້ນກໍຄືອິສຣະນັ້ນເອງ

ຈາກແສງຕາທີ່ທັງຊື່ນຊົມແລະອິດສາຂອງຜູ່ຄົນ
ທີ່ແນມມາທາງນາງແລະອິສຣະນັ້ນ
ນາງກໍໄດ້ແຕ່ບອກຕົນເອງວ່າ
ເຂົາເປັນພຽງກັລຍານິດທີ່ດີ
ທີ່ຊົ່ວຊີວິດນີ້ນາງຄົງຈະຫາບໍ່ໄດ້ອີກແລ້ວ
ນາງຈື່ຈຳໄດ້ດີວ່າ  ທັນທີທີ່ເຂົາຮູ້ວ່າມື້ນີ້ເປັນມື້ຕັກບາດ
ເຂົາກໍຊວນນາງມາຕັກນຳກັນ
ນອກນັ້ນເຂົາຍັງເວົ້າອີກວ່າ
ນັບຕັ້ງແຕ່ກັບມາບ້ານເກີດເມືອງນອນ
ເຂົາບໍ່ມີໂອກາດໄດ້ໄປຕັກບາດຈັກເທື່ອ

ດັ່ງນັ້ນຖ້ານາງບໍ່ລັງກຽດຄົນແປກໜ້າຢ່າງເຂົາ ເຂົາຈຶ່ງຢາກຂໍເຊີນນາງຮ່ວມທາງເລີຍ

ຫລັງຈາກທີ່ນັ່ງພັບພຽບຮຽບຮ້ອຍແລ້ວ ແລະກໍມີເຂົານັ່ງຢູ່ຄຽງຂ້າງ ນາງກໍອົດຖາມຕົນເອງບໍ່ໄດ້ວ່າ ນີ້ເປັນຄວາມຝັນບໍ່?
ເປັນຫຍັງຍິງສາວທີ່ມີເປັນຮ້ອຍເປັນພັນເຂົາຈຶ່ງມາໃຫ້ຄວາມສົນໃຈຕໍ່ແຕ່ນາງຜູ້ດຽວ?
ຂ້າງຝ່າຍອິສຣະໃນບາງຄັ້ງກໍອົດຖາມຕົນບໍ່ໄດ້ວ່າ ເຂົາມາເຮັດຫຍັງກັນນີ້?
ແນ່ນອນວ່າເຂົາມີຄວາມສົນໃຈຕໍ່ອອນວິໄລຜູ້ຊຶ່ງຄ້າຍຄືງກັບວຽງປະພາ
ຍິງສາວທີ່ເຂົາເຄີຍຮັກແລະກໍຍັງຄົງຮັກຢູ່ຕາບເທົ່າເຖິງທຸກວັນນີ້ ເຂົາຢາກຈະບອກຕົນເອງວ່າ
ກໍເພາະນາງເຮັດໃຫ້ເຂົາຈື່ຈໍາພາບເກົ່າໆທີ່ເຂົາແລະວຽງປະພາເຄີຍມີຮ່ວມກັນ
ແຕ່ໃນຂະນະດຽວກັນ ເຂົາກໍບໍ່ປະຕິເສດວ່າ ອອນວິໄລມີຄວາມໜ້າຮັກ ໜ້າສເນ່ຫາ
ແລະເໜືອສິ່ງອື່ນໃດ ນາງມີຄວາມໜ້າສົງສານໃນຊີວິດທີ່ເປັນໄປ
ຊຶ່ງຫາການາງໄດ້ມີໂອກາດໄປຢູ່ຕ່າງປະເທດຄືເຂົາ
ນາງຄົງຈະຮຽນຈົບໄດ້ປຣິນຍາບັດບໍ່ຫລຸດລົ້ນເຂົາເລີຍ

ໃນຂະນະທີ່ການຕັກບາດຍັງດໍາເນີນໄປນັ້ນ
ອິສຣະບໍ່ອາດລະສາຍຕາຂອງເຂົາໄປຈາກອິສຣິຍະບົດທີ່ແຊ້ມຊ່ອຍຂອງນາງໄດ້
ຈາກມືຍາວສ້ວຍທີ່ບັນຈົງຈັບຕ້ອງເຂົ້າຕົ້ມຈາກຂັນສູ່ບາດຂອງພຣະສົງ
ຈາກໃບໜ້າທີ່ເຕັມໄປດ້ວຍສັດທາແຫ່ງຄວາມດີງາມມຸ່ງໄປສູ່ຈີວອນເບື້ອງໜ້າ
ແລະຈາກນໍ້າໃສໆທີ່ເໝືອນຈະຫລັ່ງລົ້ງງດວງຕາຄູ່ນັ້ນ
ລົນຫລັ່ງໄປກັບຢາດນໍ້າແຕ່ລະຢົດທີ່ລົນຫລັ່ງລົງດິນ ເຮັດໃຫ້ຫົວໃຈຂອງອິສຣະເຖິງກັບສັ່ນສະທ້ານ
ອິສຣະຕະໜັກໃນທັນໃດວ່າ ນີ້ຄືເພັດນໍ້ານຶ່ງຂອງເມືອງລາວ
ຊຶ່ງເຂົາບໍ່ອາດຖືນາງເປັນດັ່ງຮູບເງົາຂອງວຽງປະພາໄດ້ອີກຕໍ່ໄປ

ກ່ອນທີ່ການຕັກບາດຈະເລີກລາກັນໄປນັ້ນ ອອນວິໄລໄດ້ຂໍຕົວເພື່ອເອົາອາຫານທີ່ນາງປຸງແຕ່ງ
ມາສະເພາະເພື່ອອຸທິດຖວາຍແກ່ພຣະສົງອົງຄະເຈົ້າ
ອາດຈະດ້ວຍແຮງສເນ່ຫາທີ່ອີ່ມອາບໄປດ້ວຍຄວາມດີງາມຂອງນາງ ອິສຣະຈຶ່ງຕິດຕາມນາງໄປນໍາ
ແລະເມື່ອເຫັນນໍ້າຕາຂອງນາງຊຶມອອກມາໃນຂະນະທີ່ຖວາຍອາຫານນັ້ນ ເຂົາກໍຕະໜັກວ່າ
ນີ້ບໍ່ແມ່ນການຖວາຍອາຫານທັມມະດາ ແຕ່ຕ້ອງແມ່ນດ້ວຍໂອກາດໃດໂອກາດນຶ່ງເປັນແນ່ແທ້

“ວອນວິໄລ ມື້ນີ້ແມ່ນມື້ວັນເກີດເຈົ້າແມ່ນບໍ່?” ອິສຣະຕວງຖາມຂຶ້ນເພາະເຂົາເຄີຍຈື່ວ່າ
ມື້ວັນເກີດນັ້ນຊາວພຸດເຮົາມັກໄປຖວາຍອາຫານທີ່ແຕ່ງຂຶ້ນເປັນພິເສດໃຫ້ແກ່ຄູບາອາຈານຢູ່ວັດ
ນາງໄດ້ງຶກຫົວຮັບ ໂອ້ນໍ ເຂົາຊ່າງມີຈິດວິນຍານທີ່ລ່ວງຮູ້ແທ້
ແລ້ວຈະບໍ່ໃຫ້ນາງສະອື້ນໃນໃຈໄດ້ຢ່າງໃດກັນ?
“ຄັນຊັ້ນ ມື້ນີ້ເຮົາໄປສລອງກັນນໍ” ອິສຣະຮັບຂັນອາສາເປັນເຈົ້າມືທັງທີ່ກໍບໍ່ຮູ້ວ່າ
ຈະໄປສລອງຢູ່ໃສກັນແທ້?
“ແລ້ວເຈົ້າບໍ່ຄາວຽກອື່ນບໍ່?” ວອນວິໄລຖາມຂຶ້ນ
ເພາະຄືນມືຄ່ຳຢ່າງເຂົາຄົງຖືກວຽກງານຈັບຈ້ອງຫມົດແລ້ວ
“ຊ່າງເວົ້າໄປໄດ້ ແຕ່ເຖິງຄາວຽກອື່ນໃດ ຂ້ອຍກໍມີໃຫ້ເຈົ້າສເມີ” ທັນທີທີ່ເປັ່ງຄຳເວົ້າອອກໄປ
ອິສຣະກໍເຖິງແປກໃຈໃນຕົວເອງ
ເພາະຄຳເວົ້າດັ່ງກ່າວຊ່າງເຫມືອນກັບຄຳເວົ້າທີ່ເຂົາເຄີຍມີໄວ້ໃຫ້ວຽງປະພາ
ແລະກໍຊຶ່ງເຂົາບໍ່ຄິດວ່າຈະມີໃຫ້ຍິງສາວອື່ນໃດອີກແລ້ວໃນໂລກນີ້



---

ຕລອດທັງວັນ ວອນວິໄລກັບອິສຣະແມ່ນວ່າເຫມືອນດັ່ງເງົາຕາມຕົວ
ຈາກການທ່ຽວໄປຊອກຊື້ຫາຂນົມເຄັກສູ່ເຂົ້າຂອງມາເຮັດກິນຢູ່ເຮືອນ
ແລະຈາກການຕິດຕ້ອຍຫ້ອຍຕາມເຂົາໄປຮັບເອົານ້ອງສາວຂອງນາງທີ່ກຳລັງຮຽນຕໍ່
ຢູ່ມະຫາວິທະຍາໄລແຫ່ງຊາດຫລືດົງໂດກເກົ່າ ເອົາເປັນອັນວ່າ
ນາງຕ້ອງຂີ່ລົດໂມໂຕໄຊຊ້ອນທ້າຍເຂົາໄປຕລອດທາງ
ຊຶ່ງບາງຄັ້ງນາງກໍຫລີກລ້ຽງບໍ່ໄດ້ທີ່ຈະໂອບແອວເຂົາຈົນແຫນ້ນ
ອັນເຮັດໃຫ້ຫນ້າຂອງນາງແດງຫມົດ ເພາະຕັ້ງແຕ່ເປັນສາວມາ
ກໍມີເທື່ອນີ້ເທື່ອດຽວທີ່ຂີ່ລົດຊ້ອນທ້າຍຜູ່ບ່າວກັບເຂົາ ອຸ່ຍ ຄັນຮູ້ວ່າຊິຕ້ອງໄດ້ໂອບແອວເຂົາແລ້ວ
ຈ້າງໃຫ້ກໍບໍ່ໄປອີກ ນາງຄ້ານໃຫ້ຕົນເອງແຕ່ກໍຕ້ອງຍອມຮັບວ່ານັ້ນເປັນການຄ້ານ
ທີ່ນາງຍອມໃຫ້ເປັນໂມຄະໄດ້ຢ່າງງ່າຍໆ

ແລະຄ້າຍແລງວັນນັ້ນ ທ່ານກາງເພື່ອນຝູງ ທ່າມກາງນ້ອງຮ່ວມສາຍໂລຫິດ
ແລະທ່າມກາງຊາຍທີ່ນາງພ້ອມທີ່ຈະມອບທັງກາຍແລະໃຈໃຫ້
ວອນວິໄລເປົ່າທຽນໄຂທີ່ຕັ້ງຢູ່ເທິງຂນົມເຄ້ກອັນມີເລກ21ຕັ້ງຢູ່ເທິງນັ້ນດ້ວຍ
ຫລັງຈາກຕັດຂນົມເຄ້ກແລະແຈກຢາຍກັນສູ່ຄູ່ສູ່ຄົນແລ້ວ
ນ້ອງສາວຂອງນາງກໍເຂົ້າໄປຫາເມື່ອເຫັນວ່ານາງຢູ່ພຽງລຳພັງ
"ອະແຮມ! ເອື້ອຍເຮົາຄືມີຄວາມສຸກແທ້ນໍມື້ນີ້
ສົງໃສຫົວໃຈຖືກຄອບຄອງຈົນບໍ່ເຫລືອຫລໍແລ້ວບໍ່ຈັກ?"
"ຊິບໍ່ໃຫ້ເອື້ອຍມີຄວາມສຸກແນວໃດ ແນວດົນໆຈັ່ງຊິເຫັນຫນ້ານ້ອງຄົນງາມຈັກເທື່ອ"
ວອນວິໄລເວົ້າອ້ອມອ່ຽມໄປເພາະນາງຮູ້ຢ່າງເຕັມອົກວ່າ ນ້ອງສາວຂອງນາງຫມາຍເຖິງຜູ່ໃດ?
ບາງເທື່ອນາງກໍຢາກຕຳຫນິນ້ອງຂອງນາງທີ່ສົ່ງສາຍຕາໃຫ້ທ້າຍແກ່ອິສຣະ
ຜູ່ຊຶ່ງຫາກເປັນຄົນອື່ນແລ້ວ ກໍຄົງຈັບເອົາເປັນແນ່ແທ້
"ບໍ່ແມ່ນຕັ້ງເວົ້າເດີ ຖ້າເອື້ອຍເຮົາເບື່ອອ້າຍອິສຣະຍາມໃດ ຢ່າລືມບອກນ້ອງແທ້ໆໃດ໋"
ນ້ອງຂອງນາງເວົ້າທັງແກມຫລິ້ນແກມອີຫລີ ອັນເຮັດໃຫ້ວອນວິໄລເຖິງກັບຢິກແຂນນ້ອງສາວ
ອັນພາໃຫ້ເກີດໄດ້ຍິນສຽງ "ໂອຍ!" ເສັຽບາດນຶ່ງ

ແລະກ່ອນງານຈະເລີກບໍ່ດົນ ມະນີຊຶ່ງຫາກໍ່ແລ້ວວຽກທີ່ຮ້ານກິນດື່ມກໍມາເຖິງ
ໃຈນຶ່ງນັ້ນນາງກໍດີໃຈນຳເພື່ອນທີ່ໃນທີ່ສຸດກໍມີຄົນຮັກຄືກັບເຂົາອື່ນ ແຕ່ອີກໃຈນຶ່ງນາງກໍເຂົ້າໃຈດີວ່າ
ອັນອິສຣະນີ້ ແມ້ນແຕ່ເພື່ອນຂອງນາງທີ່ນາງຖືວ່າເປັນເພັດກໍບໍ່ອາດເອື້ອມມືເຖິງເຂົາໄດ້
ນາງຢາກຈະບອກເຕືອນເພື່ອນ ແຕ່ກໍຄິດວ່າຄືນນີ້ເປັນຄືນຂອງເພື່ອນ
ດັ່ງນັ້ນຫາກພອນຂອງນາງສັກສິດໄດ້ ກໍຂໍໃຫ້ເພື່ອນຈົ່ງມີຄວາມສຸກແລະເຂັ້ມແຂງ
ເພາະອັນຂ້າງບໍ່ມີໃຜຮູ້ວ່າ ອັນຄວາມສຸກໃນວັນນີ້ມັນຈະແຝງໄປດ້ວຍຢາດນ້ຳຕາຫລືບໍ່?

## ຜ. ບຸນມີພາເມັຽເມືອຢາມລາວ

ນັບວ່າເປັນເວລາເກືອບປີນຶ່ງນັບເຂົ້າໄດ້ທີ່ບຸນມີໄດ້ມີຢ້າວມີເຮືອນເປັນຝັ່ງເປັນຝາ
ທາງຝ່າຍຜູ່ເປັນເມັຽກໍວ່າຄິດຮອດບ້ານ ຢາກຄືນໄປຢາມ
ບຸນມີເອງກໍຄິດຮອດອິສຣະຜູ່ໄປແລ້ວໄປລ້ຳ ບໍ່ເຫັນຈົດຫມາຍມາຫາຈັກກ້ານ ເຂົາກໍເລີຍຄິດວ່າ
ບ່ະໄປຢາະເບິ່ງຫມໍນີ້ຈັກບາດກ່ອນ ບໍ່ຮູ້ວ່າເພື່ອນເກີຈະເປັນຫລືຕາຍຈັ່ງໃດ?

ແຕ່ເອະຈະເວົ້າອີກຢ່າງ ອິສຣະກໍບອກເຂົາແລ້ວວ່າ ຫນໍຈະພະຍາຍາມລືມອະດີດ
ເພາະມັນຄົງເປັນໄປບໍ່ໄດ້ອີກແລ້ວທີ່ຫນໍຈະຫ່ວນຢ່ອນຄືນມາຢູ່ອະເມຣິກາພີ້ອີກ
ຊຶ່ງນັ້ນກໍຫມາຍຄວາມວ່າ ລືມວຽງປະພາ ແລະລືມເພື່ອນຄົນນີ້ໄດ້ທັງຄົນນັ້ນເອງ

ແຕ່ເຖິງອິສຣະຈະໃຈຈືດໃຈດໍາກໍຕາມ ບຸນມີກໍຍັງຄິດວ່າ ຫາກເມື່ອເປັນເພື່ອນກັນແລ້ວ
ຖ້າບໍ່ຕາຍຈາກກັນເສັຽກ່ອນ ຄວາມເປັນເພື່ອນນັ້ນກໍຍັງຄົງມີຢູ່ໃນດວງໃຈເຂົາສເມີ
ແລະເຂົາກໍຫມັ້ນໃຈອິສຣະກໍຄົງຈະເປັນເຊັ່ນເຂົາ ເຫດທີ່ຫນໍເປັນແປກໆບ້ານແປກໆເມືອງນີ້
ຫາກຈະມີກໍພຽງວຽງປະພາແລະຫນໍເອງເທົ່ານັ້ນທີ່ຈະເຂົ້າໃຈໄດ້
ສໍາຫລັບເຂົາເອງແລ້ວແມ່ນວ່າບໍ່ຢາກຂໍຫຍຸ້ງກ່ຽວນໍາອີກຕໍ່ໄປອັນເລື້ອງຮັກໆໃຄ່ໆແບບໂຣມີໂອແລະ
ຊູລຽດ (Romeo & Juliet) ນີ້ ແຕ່ເຖິງຢ່າງໃດກໍດີ
ໃນບາງຄັ້ງຄາວທີ່ເຂົາໄດ້ມີໂອກາດພົບພໍ້ເຂົ້າກັບວຽງປະພາຢ່າງຈັງໆ
ແລະຮູ້ວ່ານາງຍັງຄົງຖາມຂ່າວຄາວຫາເພື່ອນເກົ່າຢູ່ ເຂົາກໍຄິດຢາກຮູ້ວ່າ ອັນເພື່ອນເກີຂອງຕົນເດ
ຈະໄປແລ້ວໄປລໍ້າແທ້ບໍ່?

ຫລັງຈາກໄດ້ໄປຊອກທ່ຽວຖາມຫາອິສຣະຢູ່ດົນເຕີບຈຶ່ງໄດ້ຮູ້ວ່າ
ເຈົ້າເພື່ອນຂອງຕົນຊຶ່ງແຕ່ກີ້ວ່າປະຈໍາການຢູ່ເຂື່ອນນໍ້າງື່ມ
ມາບັດນີ້ມາປະຈໍາການຢູ່ໂຕກະຊວງໃນນະຄອນຫລວງວຽງຈັນນີ້
ທໍາອິດບຸນມີກໍຄິດວ່າຈະດິ່ງໄປຫາເພື່ອນໂລດ ແຕ່ຈັກເກີດແນວຄິດຢ່າງໃດຈຶ່ງວ່າ
ບ່ະຂໍເປັນນັກສືບຈັກບາດ ເພາະຢາກຮູ້ເຫລືອເກີນວ່າ
ອັນຄົນທີ່ມີອາລົມໂຣເມນຕິກເຊັ່ນເພື່ອນກໍາລັງເຮັດຫຍັງຢູ່?
ຫລືວ່າໄປຕິດໃຈສາວນ້ອຍຄົນໃດຄົນນຶ່ງເຂົ້າຢ່າງຈັງໆເສັຽແລ້ວບໍ່?



ເອົາເປັນວ່າ ເມື່ອສືບຮູ້ໄດ້ວ່າ ຫລັງຈາກເລີກວຽກ
ໄດ້ຍິນເຂົາວ່າອິສຣະມັກໄປນັ່ງຟັງເພງຢູ່ຮ້ານກິນດື່ມແຄມຂອງ
ບຸນມີກໍເລີຍເອົາຕົວໄປນັ່ງຫລີ້ຢູ່ແຈຮ້ານ ບ່ອນທີ່ຜູ່ຄົນບໍ່ມັກຄ່ອຍໄປນັ່ງ
ຊຶ່ງນັ້ນເຫມາະເຈາະກັບເຂົາດີ ເພາະຫາກວ່າອິສຣະເຂົ້າມາໃນຮ້ານ
ເຂົາຈະເຫັນເພື່ອນກ່ອນໂດຍທີ່ເພື່ອນອາດບໍ່ທັນໄດ້ສັງເກດວ່າມີເຂົາຢູ່ໃນຫັ້ນກ່ອນກໍເປັນໄດ້
ໃນຂະນະທີ່ນັ່ງກິນເບັຽລາວຣົດກົມກຽວນັ້ນຢູ່ນັ້ນ ບຸນມີກໍອົດສັງເກດບໍ່ໄດ້ວ່າ
ອັນສາວເສີຟນາງນຶ່ງຊ່າງຄັບຄ້າຍຄັບຄາວຽງປະພາຢ່າງກັບວ່າເປັນລູກຝາແຝດກໍບໍ່ປານ
ແລະທັນທີທີ່ສຳນຶກເຖິງຂໍ້ນີ້ໄດ້ ບຸນມີກໍເຖິງກັບຮ້ອງໂອະວ່າ ສົມພໍ ສົມພໍ ນີ້ບໍ່ໄດ້ຂອງຈິງ
ກໍຊິເອົາຂອງປອມລະບໍ່? ເພື່ອນເຮົານີ້



ພອມວ່າຈະໃຫ້ລາງວັນແກ່ຕົນເອງທີ່ເປັນນັກສືບ
ຊັ້ນຍອດໂດຍການກຶກແກ້ວເບັຽລົງຫມົດຂວດນີ້
ສຽງນຸ່ມໆນວນຫູກໍດັງຂຶ້ນຂ້າງໆ
"ເອົາອີກຂວດບໍ່ ອ້າຍ?" ວ໋າວ!
ນ້ຳສຽງຂອງນາງຄົນນັ້ນທີ່ບັດນີ້ມາຢືນຢູ່ຕໍ່ຫນ້າເຂົາກໍບໍ່
ແມ່ນຂອງຄ່ອຍ ນີ້ຖ້າເປັນເມື່ອກ່ອນແຕ່ງງານ
ເຮັດແນວໃດກໍຕ້ອງຈີບເອົາເປັນແຟນເສັຽແທ້ແນ່ນອນ
ແຕ່ບ໋ະ ລອງຈີບຫລີ້ນເບິ່ງກ່ອນ
ຢາກຮູ້ວ່າອັນທີ່ອິສຣະພິສວາດນັ້ນ
ມັນແມ່ນຫຍັງກັນແທ້ນອກຈາກຮູບຮ່າງຫນ້າຕາທີ່ຄ້າຍ
ຄືງກັບວຽງປະພາ?

"ເອີ! ນ້ອງສາວ ອ້າຍເປັນບ່າວໂສດຫາກໍ່ມາແຕ່ອະເມຣິກາໃຫມ່ໆ
ບໍ່ຮູ້ວ່າເຂົາເຮັດແນວໃດກັນຢູ່ນີ້?" ເມື່ອເວົ້າອອກໄປແນວນັ້ນ ແລະກໍເຫັນນາງເຫັນສີຫນ້າງຸນງົງ
ບຸນມີຈຶ່ງຕໍ່ເຕີມວ່າ
"ຄືອ້າຍຢາກຖາມວ່າ ຖ້າອ້າຍຢາກໃຫ້ນ້ອງມານັ່ງຮ່ວມໂຕະນຳ ນ້ອງຊິຄິດລາຄາເທົ່າໃດ?"
ບໍ່ທັນທີ່ຄຳເວົ້າຈະອອກຈາກປາກຂອງເຂົາຫມົດ ນາງຄົນນັ້ນກໍວ່າຂໍຕົວກ່ອນ ບາດຫວ່າງວຽກແລ້ວ
ຈະມານັ່ງສົນທະນານຳ ບຸນມີແນມນຳຫລັງນາງໄປ

ຊຶ່ງເຖິງເຂົາຈະຂ່ອນຂ້າງຕິຕ່ຳຄົນທີ່ຫາກິນຢູ່ຕາມຮ້ານກິນດື່ມ
ຊຶ່ງໃນທັສນະຂອງເຂົາກໍຄືບາຣນັ້ນເອງ ເຂົາກໍຕ້ອງຍອມຮັບວ່າ
ນາງຄົນນີ້ມີຣັສມີຂອງກຸລສະຕີທີ່ທັງຮູ້ຈັກໃຫ້ກຽດແລະໄວ້ຕົວໃນຂະນະດຽວກັນ
ເວົ້າງ່າຍໆກໍແມ່ນວ່າ ນາງປະຕິເສດເຂົາຢ່າງສຸພາບ ຊຶ່ງຫາກເປັນຍິງເສີຟຄົນອື່ນແລ້ວ
ໄດ້ຍິນແນວທີ່ເຂົາກ່າວມານັ້ນ ຕ່າງກໍລ້ອນແລ້ວແຕ່ຄຸບໃສ່ໄວປານຫຍັງ?



ແລະອີກບໍ່ດົນ ເມື່ອຫວ່າງຈາກການຮັບໃຊ້ແຂກຄົນທີ່ບາງຄັ້ງບາງຄາວຄືຫມາກຄາງປີ້ນຢູ່ບໍ່ເຊົາ
ນາງກໍຫຍັບຍ້າຍເຂົ້າມາຫາເຂົາພ້ອມກັບການຂໍໂທດເປັນການໃຫຍ່ທີ່ເຮັດໃຫ້ເຂົາຕ້ອງໄດ້ລໍຖ້າດົນ
ນາງວ່ານາງບໍ່ຄິດລາຄາຫຍັງດອກ ຖ້າແຂກຈະເຫັນໃຈ ໃຫ້ເງິນທິບ (tip)
ນຳຄ່າອາຫານເຫລົ້າເບັຽກໍພໍ
"ຂໍໂທດນໍ ນ້ອງຊື່ຈັ່ງໃດ? ແລະກໍເຮັດວຽກງານນີ້ມາໄດ້ດົນປານໃດແລ້ວ? "ບຸນມີຖາມອອກໄປຊື່ໆ
ໃຈນຶ່ງກໍຢາກຮູ້ຊື່ສຽງລຽງນາມຂອງນາງ
ແຕ່ອີກໃຈນຶ່ງກໍພຽງແຕ່ຢາກຈະໄດ້ຍິນການເວົ້າຈາຂອງນາງ ເພື່ອເຂົາຈະພິສູດໂດຍຕົນເອງວ່າ
ອັນນາງຄົນນີ້ຖ້າທຽບໃສ່ວຽງປະພາແລ້ວ ແມ່ນຢູ່ໃນອັນດັບໃດກັນແທ້?
"ນ້ອງຊື່ວອນວິໄລ ແຕ່ຫມູ່ກອງແລະລູກຄ້າຕ່າງໆກໍເອີ້ນນ້ອງວ່າ ວອນ"
ນາງຢຸດຢູ່ບຸດນຶ່ງເຫມືອນຈະພວມຄິດວ່າ ຈະຄວນເວົ້າສິ່ງໃດດີ ຈາກນັ້ນນາງກໍຕໍ່ຄວາມວ່າ
"ນ້ອງເຮັດວຽກເປັນພະນັກງານຢູ່ຮ້ານກິນດື່ມນີ້ມາໄດ້ເກືອບສອງປີແລ້ວ"
"ແລ້ວນ້ອງຄິດວ່າ ຈະເຮັດວຽກແນວນີ້ໄປອີກດົນປານໃດ?" ບຸນມີຖາມຕໍ່
"ກະວ່າອີກຈັກສອງສາມປີຕື່ມ ພໍໄດ້ສະສົມເງິນກ້ອນຈຳນວນນຶ່ງ"
"ຢ່າຫາວ່າອ້າຍລະລ້ຳລະລ້ອງເດີ ອ້າຍຢາກຮູ້ວ່າ ຖ້ານ້ອງໄດ້ເງິນກ້ອນນຶ່ງແລ້ວ
ນ້ອງຈະເອົາໄປເຮັດກິຈການຫຍັງ?"

“ບໍ່ເປັນຫຍັງດອກອ້າຍ? ນ້ອງດີໃຈອີກທີ່ອ້າຍຖາມ ເພາະລູກຄ້າສ່ວນຫລາຍທີ່ມາກິນດື່ມທີ່ນີ້ ລ້ວນແລ້ວແຕ່ຕ່າງກໍຢາກຫາບາຍເລັກບາຍນ້ອຍຫມົດ ດົນໆທັງເທື່ອຈຶ່ງຈະມີຄົນຢ່າງອ້າຍ”
ນາງຢຸດຢູ່ບຸດນຶ່ງ ຍີ້ມໃຫ້ເຂົາຢ່າງ ແລະກໍເວົ້າຕໍ່ວ່າ
“ນ້ອງຄິດຢາກຈະເຮັດກິຈກັມທໍ່ຜ້າ ຕໍ່າຫູກ ຂາຍສິ່ງຕ່າງປະເທດ ໃນອີກສອງສາມປີຂ້າງຫນ້າ ບາດນ້ອງສາວຂອງນ້ອງຮຽນຈົບຝ່າຍການຄ້າແລ້ວ ຄິດວ່າຄືຊິເປັນໄປໄດ້”



ບຸນມີໄດ້ຟັງແລ້ວກໍອີດຊົມຊື່ນໄປນໍາຄວາມຝັນຂອງນາງບໍ່ໄດ້ ເຂົາຍອມຮັບວ່າ ນາງຄົນນີ້ນອກຈາກພຽບພ້ອມໄປດ້ວຍຄຸນສົມບັດທັງຫນ້າຕາແລະນໍໃຈໃຈຄໍແລ້ວ ນາງຍັງມີແນວຄິດກ້ວາງໄກອັນຍາກທີ່ຈະພົບເຫັນໃນຍິງສາວສ່ວນຫລາຍທີ່ເຂົາໄດ້ພານພົບມາ ອິສຣະນໍອິສຣະ ຈັ່ງແມ່ນຫມໍໂຊກດີ ເຖິງຢູ່ໃສ ຫມໍກໍພົບພໍ້ແຕ່ສິ່ງທີ່ດີໆທັງນັ້ນ
“ເອະ ຢູ່ຮ້ານກິນດື່ມນີ້ກໍມີຄົນລາວທີ່ມາແຕ່ຕ່າງປະເທດ ມາກິນດື່ມຢູ່ທີ່ນີ້ຫລາຍຢູ່ບໍ່?”
ບຸນມີຫາຮ່ອມທາງທີ່ຈະຊ໋ອກແຊ໋ກຖາມໂດຍໂຍງໄປເຖິງອິສຣະບໍ່ໄດ້
“ກະມີຢູ່ໄດ໊ອ້າຍ ໂດຍສະເພາະເມື່ອສອງສາມປີມານີ້ ຮູ້ສຶກວ່າຈະມີຫລາຍຂຶ້ນ”
“ແລະຄົນລາວທີ່ກັບມາຢູ່ນີ້ເດ ກໍມີຢູ່ບໍ່? ເພາະອ້າຍເອງກະຄິດຢາກກັບມາຢູ່ຄືກັນ ຖ້າໄດ້ຮູ້ຈັກແລະເວົ້າລົມຜູ່ທີ່ກັບມາຢູ່ກ່ອນ ກໍແຮ່ງຊິດີ” ບຸນມີເບັດໃສ່ໂດຍກົງບາດນີ້
ນາງຫລຽວເບິ່ງຫນ້າເຂົາ ເຫມືອນຈະຕັ່ງຕວງວ່າ ເຂົາຈະມາດີຫລືຮ້າຍ ແລະເມື່ອເຫັນວ່າເຂົາກໍມີຄວາມຊື່ຕົງໃນຕົວ ນາງຈຶ່ງເອີ່ຍຂຶ້ນວ່າ
“ນ້ອງກໍຮູ້ຈັກຜູ່ນຶ່ງ ລາວກັບມາໄດ້ປະມານປີນຶ່ງແລ້ວ ຖ້າອ້າຍຢາກຈະຮູ້ຈັກກັບລາວ ນ້ອງຈະແນະນໍາໃຫ້ຮູ້”
“ຂອບໃຈຫລາຍໆ ເອົາໄວ້ເທື່ອຫນ້າກ່ອນເທາະ ແຕ່ເອະ ບອກບໍ່ໄດ້ວ່າລາວເປັນຄົນແນວໃດ? ເພາະບາງຄົນນັ້ນ ຖ້າບໍ່ຮູ້ຈັກກັນມາກ່ອນແລ້ວ ແມ່ນວ່າ ບໍ່ຕ້ອງມາເວົ້ານໍາກັນເລີຍ”
ບຸນມີພະຍາຍາມຢ່າງຍິ່ງທີ່ຈະຢັ່ງທ່າທີຂອງນາງທີ່ມີຕໍ່ອິສຣະ

"ນ້ອງກ້າເວົ້າໄດ້ວ່າ ລາວເປັນຄົນດີອີຫລີ ດີຈົນນ້ອງບໍ່ເຄີຍຄິດວ່າ
ຈະມີຜູ້ຊາຍເຊັ່ນລາວຢູ່ໃນໂລກຫນ່ວຍນີ້"
ພຽງເທົ່ານີ້ ບຸນມີກໍຮູ້ຢ່າງເຕັມອົກວ່າ
ຍິງສາວຄົນນີ້ແມ່ນວ່າຈົນຫົວລົງທ້າຍກັບເພື່ອນຂອງຕົນຢ່າງຖອນຕົວບໍ່ຂຶ້ນ
ສ່ວນວ່າເລື້ອງເລິກຫນາຂອງສອງຄົນນີ້ຈະເຖິງຂນາດໃດນັ້ນ
ເຂົາຈະຕ້ອງໄດ້ສອບຖາມຈາກປາກຂອງເພື່ອນເອງໃນໂອກາດຕໍ່ໆໄປ

ພໍດີໃກ້ຈະຮອດເວລາອັດຮ້ານຢູ່ດີ ບຸນມີກໍແນມໄປເຫັນອິສຣະກ້າວຂາເຂົ້າມາໃນຮ້ານ
ເຂົາເບິ່ງຄືດຳກ່ຳໄປຫລາຍເຕີບ ແຕ່ຈາກບາດກ້າວທີ່ຍ່າງໄປ
ແລະໃບຫນ້າທີ່ຊີງໄວ້ຊຶ່ງຄວາມເອົາຈິງເອົາຈັງຕໍ່ຊີວິດ ບຸນມີກໍຕະຫນັກວ່າ
ເພື່ອນຂອງເຂົາຄົນນີ້ເປັນຜູ້ໃຫຍ່ຢ່າງເຕັມຕົວ ເຂົາເຫັນເພື່ອນດຶ່ງຕົງໄປຫາວອນວິໄລ ຍິ້ມໃຫ້
ແລະກ່ອນທີ່ຫມໍຈະຫລຽວມາທາງເຂົາ ເຂົາກໍເອົາຕົວຫລົບຫາຍອອກຈາກຮ້ານໄປກ່ອນ

---

"ເຮີ້ຍບຸນມີ ໂຕມາຍາມໃດ ຄືບໍ່ເຫັນບອກກ່ອນລ່ວງຫນ້າໃຫ້ຮູ້ແດ່"
ອິສຣະກອດຮັດເພື່ອນເຂົ້າຢ່າງຈັງ ທັນທີ່ພົ້ຫນ້າ
"ໂຕກະຊິໃຫ້ບອກແນວໃດ? ແນວໂຕຫລົ້ນບໍ່ຕິດຕໍ່ຫາ ປານວ່າຕາຍຈາກກັນໄປພຸ້ນ"
ບຸນມີເວົ້າຄວາມຈິງອອກມາ ອັນເຮັດໃຫ້ອິສຣະສຳນຶກວ່າ ອັນຕົວເຂົານີ້ຕັ້ງບໍ່ດີອີຫລີ
ແຕ່ເມື່ອເຫັນເພື່ອນສລົດໄປບາດນຶ່ງ ບຸນມີຈຶ່ງວ່າ
"ຢ່າໄປເວົ້າເລື້ອງຄວາມຫລັງເລີຍ ມະມາເວົ້າໃຫ້ເຮົາຟັງ ໂຕໄປຢູ່ໄປກິນຈັ່ງໃດ?"

ຈາກເລື້ອງລາວທີ່ອິສຣະເລົ່າມາຢ່າງຍາວຍືດຈາກການເຮັດວຽກເປັນຜູ້ຊ່ອຍ
ຈົນເຖິງອີກຕຳແຫນ່ງນຶ່ງຂອງຜູ້ຊ່ອຍໃນກົມ ບຸນມີກໍເຫັນວ່າ ຫາກເປັນເຂົາແລ້ວ
ເຂົາຕີຕົວກັບອະເມຣິກາແຕ່ດົນແລ້ວ
"ແລ້ວເລື້ອງຜູ້ສາວຜູ້ແສ້ເດ? ບໍ່ແມ່ນໄປລັກມັກຮັກສາວໃດສາວນຶ່ງເຂົ້າແລ້ວບໍ່?"
ທັນທີທີ່ຄຳເວົ້າດັ່ງກ່າວເປັ່ງອອກມາຈາກປາກ
ບຸນມີກໍຮູ້ສຶກວ່າເພື່ອນຂອງເຂົາມີສີຫນ້າສລົດໄປບັກໃຫຍ່
ເພາະນີ້ຄົງເປັນຄັ້ງແຮກທີ່ອະດີດອັນມືດຽງປະພາຕິດຕາມເຂົາມາຈົນກະທັ່ງເຖິງເມືອງລາວ
ໃນຂະນະທີ່ອິສຣະພວມອຶດອາດຫາຄຳຕອບທີ່ເຫມາະສົມຢູ່ນັ້ນ
ບຸນມີກໍເຫລືອບໄປເຫັນຮູບໃນຂອບແກ້ວທີ່ວາງໄວ້ໂຕະນ້ອຍຂອບຕຽງ

ຊຶ່ງຂ້າງຂວາຂອງຮູບແມ່ນວຽງປະພາ ແລະຂ້າງຊ້າຍຂອງຮູບແມ່ນວອນວິໄລ
ໂອ້ເພື່ອນຂອງເຮົາເປັນຫນັກຈົນເຖິງຂນາດນີ້ບໍ່? ນາງນຶ່ງນັ້ນແມ່ນນາງໃນອະດີດທີ່ບໍ່ອາດຫລົງລືມ
ແລະອີກນາງນຶ່ງນັ້ນແມ່ນນາງໃນປັຈຸບັນທີ່ໃຫ້ຄວາມຊຸ່ມຊື່ນແກ່ຊີວິດແລະຄວາມຫວັງ
ຄົງອີກຈະນານກ່ວາອິສຣະຈະໃຫ້ຄຳຕອບໄດ້ວ່າໃຜກັນແທ້ຄືເຈົ້າຂອງຫົວໃຈເຂົາດວງນີ້
ຫລືວ່າມັນຈະເປັນເຂົາເອງຜູ່ທີ່ຈະແກ້ປັສນາຊີວິດນີ້ໃຫ້ແກ່ເພື່ອນ
ບຸນມີຄິດມາແລ້ວກໍໄດ້ແຕ່ເກົາຫົວຕົນເອງ ນີ້ລະນໍທີ່ເຂົາເອີ້ນກັນວ່າ ບຸນວາສນາຂອງຄົນ
ມັນຫາກເລີກແລບຍາກທີ່ມະນຸດເຮົາຈະຢັ່ງຮູ້ໄດ້

## ກ. ວຽງປະພາຖາມຫາ

ຄືນນີ້ ວຽງປະພາຮູ້ສຶກເປັນງຸດໆງິດໆວາດໃດວາດນຶ່ງ
ນາງຄິດວ່ານາງເຊົາເປັນແນວນີ້ເມື່ອກ່ວາເຄິ່ງປີກ່ອນແລ້ວ
ເພາະວິ່ແວວທີ່ວ່າອິສຣະຈະສົ່ງຈົດຫມາຍມາຖາກຂ່າວຄາວແມ່ນບໍ່ມີໃຫ້ເຫັນພໍກ້ານ
ມັນກໍພຽງພໍທີ່ຈະເຮັດໃຫ້ໃຜກໍຕາມຫັກໃຈໄດ້ ແຕ່ມາມື້ນີ້ໄດ້ຍິນຄົນມາເວົ້າສູ່ຟັງວ່າ
ບຸນມີກັບບ້ານແລະກໍໄປພົ້ກັບອິສຣະ ວຽງປະພາຈຶ່ງມຸດມັດໃນໃຈຢາກຮູ້ວ່າ ເຂົານັ້ນເປັນຢ່າງໃດ?
ແລະກໍຍັງຄົງຄິດຮອດຄິດເຖິງນາງຢູ່ຄືເກົ່າບໍ່?



ຈະເວົ້າແລ້ວ
ນາງກໍບໍ່ມີສິດທີ່ຈະໄປທວງຖາມສິ່ງດັ່ງກ່າວຈາກອິສຣະ
ເພາະນາງເອງກໍປານວ່າເປັນທອງແຜ່ນດຽວກັບແຈຣີຜູ່
ທີ່ຄຸມນາງແຈຈົນເກືອບຈະກະດິດໄປໃສ
ມາໃສຕາມລຳພັງບໍ່ໄດ້ແລ້ວ ຫລາຍເທື່ອນາງກໍຄິດວ່າ
ເມື່ອອິສຣະເຮັດໄດ້ຢ່າງວ່າ
ມັນກໍເຖິງທີນາງທີ່ຈະຕັດໃຈອອກຈາກເຂົາໃຫ້ມັນຫມົດ
ເຍື້ອຂາດໃຍກັນເສັຽທີ ນາງບອກກັບແມ່ວ່າ
ນາງຈະໃຫ້ຄຳຕອບຢ່າງຄັກແນ່ກັບແຈຣີກ່ຽວກັບເລື້ອງ
ການແຕ່ງງານ ຫລັງຈາກປີໃຫມ່ສາກົນຜ່ານໄປ
ຊຶ່ງນັ້ນກໍຫມາຍຄວາມວ່າ ນີ້ຍັງບໍ່ພໍອີກເທົ່າໃດເດືອນ

ວັນເວລາແຫ່ງການຕັດສິນໃຈນັ້ນກໍຈະວຽນມາຮອດ ມາເຖິງໃນທີ່ສຸດ

ນາງບອກຕົວເອງວ່າ ມັນມີສິ່ງນຶ່ງທີ່ເຮັດໃຫ້ນາງບໍ່ທັນຢາກລົ້ມຫົວຈົມທ້າຍກັບແຈຣີເທື່ອ
ສິ່ງນັ້ນກໍຄືນາງ ນາງຢາກຈະໄດ້ຍິນຈາກປາກອິສຣະວ່າ ເຂົາບໍ່ໄດ້ຮັກນາງອີກຕໍ່ໄປ
ຊຶ່ງຫາກນັ້ນເປັນທີ່ຈະແຈ້ງເມື່ອໃດ ນາງຈະບໍ່ຫລຽວຄືນຫລັງອີກເລີຍ

ວຽງປະພານອນພິກຂ້ວາມພິກງາຍຢູ່ຈົນຂ່ອນຄືນກ່ວາທີ່ໃນທີ່ສຸດເປືອກຕາທີ່ອ່ອນເປັ້ຽຂອງນາງຈະ
ຫລັບລົງໄດ້ ແຕ່ກ່ອນຈະຫລັບໄຫລນັ້ນ ນາງບອກຕົນເອງວ່າ ມື້ອື່ນນີ້ເຮັດແນວໃດ
ນາງກໍຕ້ອງໄປຖາມຄວາມຈິງກ່ຽວກັບອິສຣະນຳບຸນມີໃຫ້ໄດ້

---

"ໂອ້ພາບໍ່? ເຊີນເຂົ້າມາ ເຮັດແນວໃດຮ້ອຍວັນພັນປີຈຶ່ງມາໃຫ້ເຫັນໜ້າເທື່ອນຶ່ງ"
ກໍດັ່ງເຊັ່ນເຄີຍບຸນມີອົດຢອກລໍ້ເພື່ອນຍິງຂອງເຂົາຄົນນີ້ບໍ່ໄດ້
"ບຸນມີເຈົ້າກໍຊ່າງເປັນ ຊິເມືອຢາມເມືອງລາວທັງເທື່ອກໍບໍ່ບອກໃຫ້ຮູ້"
ວຽງປະພາຄ້ອນໃຫ້ບຸນມີເສັຽໃຫຍ່
"ກໍຢາກບອກໃຫ້ຮູ້ຢູ່ ແຕ່ແນວເຈົ້າຖືກຄຸມແຈແນວນີ້ ດີບໍ່ດີຈະຫົວແຕກຍ້ອນລ້າໆ ເວົ້າໄປເວົ້າມາ
ມືປືນໄປໃສແລ້ວ ຄືບໍ່ເຫັນມາຄອຍຄຸ້ມກັນນາງຟ້າຫວະ?"
"ກະໄດ້ແຕ່ເວົ້າຫລິ້ນຢູ່ນັ້ນລະ ເປັນແນວໃດໄປລາວມາ ມີຫຍັງມາຝາກແດ່?"
"ກະມີແຕ່ຫົວໃຈໃຜຜູ້ນຶ່ງເທົ່ານັ້ນລະມາຝາກນຳ ພາເອີຍ!" ເອົາເຂົ້າແລ້ວບໍ່ລະ
ຄາລົມຄົມຄາຍທີ່ພາຫາເລື້ອງຂອງເຂົານີ້

ພຽງຄຳວ່າຫົວໃຈຂອງໃຜຜູ້ນຶ່ງເທົ່ານັ້ນ
ຫົວໃຈຂອງວຽງປະພາກໍຮູ້ສຶກເຕັ້ນເປັນຕຸ໋ບໆຕັ໋ບໆເຂົ້າເສັຽບາດໃຫຍ່ ຫລືວ່າເຂົາຍັງມີໃຈໃຫ້ເຮົາຢູ່?
ຖ້າເປັນແນວນັ້ນ ແລ້ວເຫດໃດ
ເຂົາຈຶ່ງມາເຮັດເສີຍເມີຍຄືຄົນທີ່ສິ້ນເຍື້ອຂາດໃຍກັບເຮົາໄດ້ຢ່າງລົງຄໍ ພໍແຕ່ເວົ້າແນວນີ້ອອກໄປ
ແລະກໍເຫັນກີຣິຍາທີ່ເອົາຈິງເອົາຈັງຂອງວຽງປະພາແລ້ວ ບຸນມີກໍວ່າ ກູນໍກູ
ຫາເຫົາເຂົາໂຕເສັຽແລ້ວບໍ່ລະ

ເປັນອັນວ່າ ບຸນມີຕ້ອງຫລິ້ນລູກເວົ້າແຕ່ແນວມ່ວນໆເຊັ່ນວ່າ ອິສຣະກໍຄ່ອຍຢູ່ດີມີສຸກ
ແຕ່ຫມໍຫາກຄາວຽກຫລາຍ ກໍເລີຍບໍ່ໄດ້ມີໂອກາດຕິດຕໍ່ສົ່ງຂ່າວຫາໃຜ ແຕ່ຫມໍກໍວ່າ

ສັ່ງຄວາມຄິດຮອດຄິດເຖິງມາເຖິງວຽງປະພານຳ ຊຶ່ງນັ້ນເຂົາຕໍ່ເຕີມເອງ
ແຕ່ຈະໃຫ້ເຂົາຍັ່ງໃຈອິສຣະແລ້ວ ມັນຍິ່ງກ່ວາຄວາມຄິດຮອດຄິດເຖິງວຽງປະພາ
ເພາະນັ້ນມັນເປັນຄວາມຮັກທີ່ຊາດນີ້ບໍ່ອາດເອື້ອມໃຫ້ເປັນຈິງໄດ້

ວຽງປະພາເອງກໍພໍຮູ້ວ່າ ບຸນມີຕໍ່ຕື່ມຄວາມ ແຕ່ນາງກໍພໍຈັບຈຸດໄດ້ວ່າ
ສິ່ງທີ່ບຸນມີເລົ່າມານັ້ນມີເຄົ້າເຫງົ້າຂອງຄວາມຈິງຊ່ອນເຮັ້ນຢູ່ ເພາະບໍ່ແມ່ນວ່ານາງຈະບໍ່ຮູ້ວ່າ
ບ່ອນໃດບຸນມີເວົ້າແທ້ ຕໍ່ເຕີມ ຫລືຮູ້ສຶກຈາກປະຕິກິຣິຍາຂອງອິສຣະ ແລະໃນນາທີນັ້ນ
ນາງກໍຕັດສິນໃຈວ່າ ນາງຈະກັບເມືອເມືອງລາວໃຫ້ເຫັນກັບຕາວ່າ
ອິສຣະຍັງຄົງເປັນຊາຍໜຸ່ມທີ່ຍັງຮັກນາງຄືເກົ່າກ່ອນບໍ່?

ບຸນມີຫລຽວເຫັນສີໜ້າທີ່ເອົາຈິງຂອງນາງ ກໍໄດ້ແຕ່ຖອນຫົວໃຈໃຫຍ່ ແລະກໍບອກຕົນເອງວ່າ
ເລື້ອງມັນຈະເກີດ ມັນກໍຕ້ອງເກີດ ສ່ວນເຂົານັ້ນໄດ້ທຳໜ້າທີ່ມີທີສາມຢ່າງດີທີ່ສຸດ
ຕໍ່ໄປນີ້ມັນຈະເປັນເລື້ອງຂອງຮັກສາມເສົ້າຈະເປັນຜູ່ຕັດສິນກັນເອງ

-----------------------------------------------------------------.

ຂ້າງຝ່າຍອິສຣະ ຫລັງຈາກບຸນມີກັບເມືອອະເມຣິກາແລ້ວ ເຂົາກໍເປັນວຸ່ນເປັນວາຍໃຈຂຶ້ນມາ
ແນວອັນເລື້ອງທີ່ເຂົາຄິດວ່າປະໃຫ້ວັນເວລາຝັງຄວາມຫລັງ
ຫລືໃຫ້ຄວາມຮັກເປັນອັມມະຕະໄປຢ່າງບໍ່ຕ້ອງມາປະເຊີນກັບຄວາມຈິງນັ້ນ
ມາບັດນີ້ບໍ່ມີເຫລືອຫລໍອີກແລ້ວ ໃນສ່ວນເລິກຂອງຫົວໃຈນັ້ນ ເຂົາຮູ້ດີວ່າ
ບໍ່ມີຍິງໃດຈະມາແທນວຽງປະພາໄດ້ ເພາະນັ້ນເປັນຄວາມຮັກຄັ້ງແຮກຂອງຊີວິດ
ແຕ່ໃນຂະນະດຽວກັນ ວອນວິໄລກໍເປັນຍິງທີ່ເຂົາສົງສານແລະຜູກພັນຢ່າງນັບມື້ນັບແໜ້ນແຟ້ນຂຶ້ນ
ມັນຄົງຈະດີຍິ່ງຖ້າວຽງປະພາເປັນດັ່ງຍິງໃນຝັນຂອງເຂົາຕລອດໄປ
ເພາະມັນຄົງບໍ່ມີທາງທີ່ເຂົາຈະກັບໄປຢູ່ອະເມຣິກາອີກຄັ້ງ ຊຶ່ງນັ້ນກໍໝາຍຄວາມວ່າ
ມັນບໍ່ມີທາງທີ່ເຂົາຈະເຮັດໃຫ້ນາງມີຄວາມສຸກສົມຄຸນຄ່າທີ່ນາງມີນັ້ນໄດ້

ຕັ້ງແຕ່ບຸນມີກັບໄປ ຫລືຖ້າຈະເວົ້າໃຫ້ຖືກ ນັບຕັ້ງແຕ່ບຸນມີມາປະກົດຕົວຢູ່ເມືອງລາວ
ວອນວິໄລກໍສັງເກດເຫັນວ່າ ອິສຣະປ່ຽນໄປ ທ່າທາງຂອງເຂົາເບິ່ງຄືເສົ້າຊຶມວາດໃດວາດນຶ່ງ
ແມ້ນວ່າເຂົາຈະທ່ຽວຮັບສົ່ງນາງໄປມາຮ້ານກິນດື່ມເປັນບໍ່ຂາດ ແຕ່ເຂົາຈະເວົ້າໜ້ອຍລົງ
ຖາມຄຳໃດກໍໄດ້ຄຳນັ້ນ ບໍ່ມີຕໍ່ຕື່ມຫລືຢອກລໍ້ຕໍ່ຄວາມຄືດັ່ງທີ່ເຄີຍເປັນມາ

ພໍ່ແມ່ຂອງນາງມາຢາມແຕ່ໂພນໂຮງກໍວ່າ ເພື່ອນຊາຍຂອງນາງເປັນຄົນທີ່ພໍ່ແມ່ເຫັນດີເຫັນພ້ອມນັ້ນ
ເສັງດາຍແຕ່ວ່າເວົ້າໜ້ອຍເກີນໄປ ເໝືອນດັ່ງຄົນທີ່ອົມຄວາມທຸກໄວ້ໃນໃຈ
ກ່ອນຈາກພໍ່ແມ່ຂອງນາງກໍເຮັດພາບາສີສູ່ຂວັນໃຫ້ລູກ
ແລະເມື່ອເຫັນລູກສາວຄົນກົກມີຊາຍທີ່ແຂງຂັນນັ່ງຢູ່ຄຽງຂ້າງ ພໍ່ແມ່ຂອງນາງກໍປີ້ມປີຕິ
ໂດຍສະເພາະແມ່ຂອງນາງນັ້ນຈົນເຖິງຂັ້ນນໍ້າຕາຍ້ອຍຍັ່ງ
ອຸ້ມປະຄອງມືຂອງອິສຣະແລະວອນວິໄລໄວ້
ເໝືອນນຶ່ງຈະບໍ່ໃຫ້ໄດ້ມີວັນຕ້ອງມາພາກຈາກກັນຈົນຕລອດຊົ່ວຊີວິດ

## ໗. ວຽງປະພາເມືອຢາມລາວ

ວຽງປະພາຢຽບຢ່າງລົງເທິງແຜ່ນດິນລາວອີກຄັ້ງພາຍຫລັງຈາກໜີອອກຈາກປະເທດໄປເປັນເວລາ
ສິບກ່ວາປີ ບອກຢ່າງກົງໄປກົງມານາງບໍ່ມີຄວາມຜູກພັນປານໃດກັບດິນແດນຕອນນີ້
ທັງນັ້ນທັງນີ້ກໍເພາະຕອນຈາກໄປນັ້ນ ນາງເປັນພຽງເດັກນ້ອຍ ບໍ່ຮູ້ຈັກອີໂນ່ອີເນ້ຫຍັງ
ດັ່ງນັ້ນຈະໃຫ້ມີຄວາມສນິດແໜນັ້ນຄືຜູ່ທີ່ເຄີຍຢູ່ມາຫລາຍຟ້າຕາປີກໍຄົງຈະເຫລືອວິໃສ
ເຫດທີ່ນາງມາລາວນີ້ກໍພຽງເພື່ອຢາກຮູ້ໃຫ້ມັນແນ່ໃຈວ່າ
ຊາຍທີ່ຕົນມີໃຈນໍານັ້ນກໍຍັງຄົງເໝືອນເດີມຢູ່ບໍ່? ຫລືວ່າປ່ຽນແປງໄປແລ້ວ?

ການມາລາວຄັ້ງນີ້ໄຄແດ່ແຕ່ມີແມ່ຜູ່ທີ່ຄຸ້ນເຄີຍກັບບ້ານກັບເມືອງມານໍາ ແມ່ເອງບອກວ່າ
ມັນເປັນການດີແລ້ວທີ່ລູກສາວຄວນຈະກັບໄປຢ້ຽມຢາກດິນແດນທີ່ຈາກມາ
ຢ່າງນ້ອຍກໍຈະເປັນໂອກາດໃຫ້ໄດ້ໄປກາບໄຫວ້ພຣະທາດກະດູກຂອງພໍ່ທີ່ວັດປ່ານໍາດ້ວຍ
ນອກນັ້ນແມ່ຍັງບອກອີກວ່າ ຖ້າທາງພີ່ນ້ອງປ້ອງປາຍຂອງຜູ່ເປັນຜົວບໍ່ຂັດຂ້ອງ
ແມ່ກໍຢາກອັງເຊີນເອົາກະດູກຂອງພໍ່ກັບໄປອະເມຣິການໍາ
ເພາະການທີ່ຈະທຽວມາລາວເປັນປະຈໍານີ້ ຄົງເປັນໄປບໍ່ໄດ້
ດີວ່າເອົາກະດູກຂອງຜົວໄປໃສ່ພຣະທາດໄວ້ທີ່ວັດເມືອງຕົນຢູ່ເລີຍ

ແມ່ຈື່ໄດ້ວ່າ ແຮກເລີ້ມທີ່ລູກສາວກ່າວເລື້ອງນີ້ກັບຕົນວ່າຢາກຈະເມືອຢາມບ້ານ
ແມ່ກໍຮູ້ໄດ້ໃນທັນໃດວ່າມັນຕ້ອງກ່ຽວກັບອິສຣະຢ່າງແນ່ນອນ ໃນໃຈຂອງແມ່ນັ້ນ
ແມ່ກໍວ່າມັນຄືບໍ່ຄັກປານໃດທີ່ຜູ່ຍິງຈະໄປຕາມຫາຜູ່ຊາຍ
ເຖິງວ່າຜູ່ຊາຍຄົນຈະເປັນຜູ່ຊາຍທີ່ມີຄຸນນະສົມບັດບໍ່ຫລຸດລີ່ນກັບຜູ່ເປັນພໍ່ຂອງລູກສາວເລີຍ

ແຕ່ໃນທີ່ສຸດແມ່ກໍເຫັນດີນຳລູກ ເພາະຈະໃຫ້ດຽວນີ້ເປັນຄືເກົ່າກ່ອນນັ້ນຄົງເປັນໄປບໍ່ໄດ້ ອີກຢ່າງຖ້າແມ່ນແມ່ໄດ້ມີໂອກາດເລືອກເອົາລູກເຂີຍແລ້ວ ໃຈຂອງແມ່ກໍອຽນເອນໄປທາງອິສຣະກ່ວາແຈຣີເປັນຂອງແນ່ນອນ ເຖິງວ່າການເລືອກນັ້ນ ຈະຍັງມີຄວາມບໍ່ແນ່ນອນໃນອະນາຄົດຂອງລູກສາວກໍຕາມ

ຄິດມາເຖິງອະນາຄົດຂອງລູກແລ້ວ ແມ່ກໍອົດຫວັ່ນໃຈບໍ່ໄດ້ ບໍ່ຮູ້ວ່າຖ້າລູກສາວຕ້ອງລົງເອີຍກັບແຈຣີ ຜູ່ວ່າທີ່ລູກເຂີຍຄົນອະເມຣິກາຂອງແມ່ຈະເປັນແນວໃດ? ເພາະເຂົາເປັນຄົນທີ່ຮູ້ສຶກຫຶງຫວງຄົນຮັກຕ່າງໆຈາກຄົນອະເມຣິກາໂດຍທົ່ວໆໄປ ບໍ່ຫນ່ຳຊ້ຳຕອນວຽງປະພາບອກເຂົາວ່າ ຈະເມືອຢາມລາວ ເຂົາກໍຈະບໍ່ຍອມໃຫ້ເມືອຢູ່ດີໆ ເຂົາວ່າຖ້າຢາກໄປແທ້ ໃຫ້ເຂົາຫວ່າງວຽກທີ່ກຳລັງຫຍຸ້ງນີ້ແລ້ວ ເຂົາຈະພາເມືອ ວຽງປະພາກໍຫລີ້ນລູກຈະໄປໃຫ້ໄດ້ເພາະນາງຖືວ່າເຂົາເປັນພຽງເພື່ອນ ບໍ່ມີສິດຫຍັງໃນຕົວນາງ ນີ້ຖ້າແມ່ບໍ່ຢູ່ຫັ້ນ ກໍຫມາຍຄວາມວ່າ ສອງຄົນນີ້ຕ້ອງມີເລື້ອງກັນຢ່າງໃຫຍ່ ແມ່ກໍເລີຍເຂົ້າໄປບອກຄູ່ຫນຸ່ມສາວທີ່ຈ້ອງຈະກັດກິນກັນນັ້ນວ່າ ມັນເປັນຄວາມຄິດຂອງແມ່ເອງທີ່ຈະໄປເຮັດບຸນໃຫ້ພໍ່ຂອງພາຜູ່ຊຶ່ງຄົບລົ້ມຫາຍຕາຍຈາກໄປ ໄດ້ຊາວປີເຕັມໆແລ້ວ

ແມ່ພາແນມເບິ່ງລູກສາວທີ່ກຳລັງຈະໄປຕລາດ



ຊື້ເຂົ້າຊື້ຂອງມາຊ່ອຍຢູ່ຊ່ອຍກິນພີ່ນ້ອງທີ່ມາພັກພາອາໃສຢູ່ ແມ່ວ່າແມ່ຈະໄປນຳ ແຕ່ລູກສາວກໍໂອວ່າ ແມ່ເຖົ້າແກ່ແລ້ວ ເດີນທາງຂ້າມທະວີບມາກໍເມື່ອຍແລ້ວ ແນມພັກຜ່ອນເອົາເຫື່ອເອົາແຮງໄວ້ພາລູກສາວລຸ່ຍທົ່ວຕົວເມືອງໃນພາຍຫລັງກໍແລ້ວກັນ ອີກຢ່າງວຽງປະພາເອງກໍຢາກຮູ້ວ່າ ອັນເມືອງວຽງຈັນທີ່ຕົນເຄີຍຢູ່ມານີ້ມັນໃຫຍ່ປານໃດ? ແລະອັນຕລາດເຊົ້ານີ້ກໍຄືວ່າເຄີຍໄປຢູ່ ມະມາລອງຢ່າງເຕາະໄປຈັກບາດເບິ່ງກ່ອນ

---

ວຽງປະພາໃນເຊົ້າມື້ນີ້ໃສ່ເສື້ອສີໄຂ່ ສະເກີດສີຕັບຫມູ ທຳອິດນາງກໍຄິດວ່າຈະນຸ່ງສິ້ນແຕ່ກໍຢ່າງບໍ່ຄ່ອງ

ແນວຊິ່ນນາຕາປີຈັ່ງຊິໄດ້ນຸ່ງຈັກເທື່ອ ນີ້ຖ້າຈື່ບໍ່ຜິດ ນາງໃສ່ສິ່ນກໍຄົງນັບນິ້ວມືໄດ້
ຊຶ່ງສ່ວນຫລາຍກໍໄປຕັກບາດຢູ່ວັດ ແຕ່ມາຫລັງໆນີ້ຫລັງຈາກຮຽນຈົບມີວຽກການເຮັດແລ້ວ
ກໍບໍ່ຄ່ອຍມີເວລາໄປວັດເລີຍ ຈຶ່ງເປັນອັນວ່າ ນາງບໍ່ໄດ້ໃສ່ສິ່ນມາເປັນປີແລ້ວນັ້ນເອງ
ຫລັງຈາກໄຖ່ຖາມພີ່ນ້ອງທີ່ມາຢູ່ນຳວ່າຕລາດຢູ່ໃສແລ້ວ ນາງກໍເດີນດົ່ງໄປ
ແຕ່ກໍຢ່າງວ່າແຫລະແນວສ່ວນຫລາຍຜູ້ຍິງລາວພາກັນນຸ່ງສິ່ນບໍ່ວ່າຢູ່ໃນເຮືອນຫລືອອກນອກເຮືອນ
ວຽງປະພາຊຶ່ງແຕ່ງຕົວແບບສາວເມືອງນອກ
ຈຶ່ງກາຍເປັນຈຸດສົນໃຈຂອງຜູ້ຄົນທີ່ທ່ຽວໄປມາຢູ່ເທິງທ້ອງຖນົນຫລວງ
ໂດຍສະເພາະຢ່າງຍິ່ງແລ້ວກໍແມ່ນວ່າພວກຜູ້ຊາຍບໍ່ວ່າຫນຸ່ມຫລືແກ່
ເມື່ອມາເຫັນນາງຟ້າເດີນດິນແລ້ວ ຕ່າງກໍຫລຽວສະງົ້ນອງໄປຕາມໆກັນ

"ວອນ ເຮັດແນວໃດມື້ນີ້ມາຍ່າງໄປໄດ້" ນໍ້າສຽງຂອງຜູ້ຊາຍດັງຂຶ້ນຢູ່ຂ້າງໆນາງ
ພ້ອມກັບສຽງມອດຈັກລົດໂມໂຕໄຊລົງ
ວຽງປະພາຮູ້ສຶກງົງງວາຍທີ່ຢູ່ໆກໍມີຄົນແປກຫນ້າມາເວົ້ານຳ ບໍ່ຫນຳຍັງເອີ້ນນາງວ່າ ວອນ ອີກ
"ທຳອິດອ້າຍກໍຄິດວ່າ ມັນເປັນໄປໄດ້ບໍ່ທີ່ຈະແມ່ນນ້ອງ
ເພາະເວົ້າແທ້ບໍ່ເຄີຍເຫັນນ້ອງນ້ອງສະເກີດມາກ່ອນຈັກເທື່ອ"
ຊາຍຄົນນັ້ນເວົ້າຕໍ່ແລະກໍບໍ່ອາດຫລົບສາຍຕາຂອງເຂົາໄປຈາກສະເກີດຂອງນາງໄດ້
ເມື່ອບໍ່ເຫັນນາງເວົ້າຫຍັງ ເຂົາຈຶ່ງຕໍ່ຕື່ມອີກວ່າ
"ຮູ້ບໍ່? ອ້າຍຂີ່ລົດກາຍນ້ອງໄປແລ້ວເທື່ອນຶ່ງ ແຕ່ໃນທີ່ສຸດກໍຕັດໃຈວ່າຕ້ອງແມ່ນນ້ອງແນ່ນອນ
ກໍເລີຍແມ່ນອີຫລີ ແຕ່ເອະມື້ນີ້ມື້ປີນຂອງນ້ອງຢູ່ໃສ ຄືບໍ່ມາຄອຍຄຸ້ມກັນຄືສູ່ມື້?"

ທັນທີທີ່ວ່າມື້ປີນຊຶ່ງທຳອິດນາງກໍຮູ້ສຶກຕື່ນ ເພາະຄຳວ່າປີນໆ
ແຕ່ກໍເຄີຍໄດ້ຍິນຫມູ່ຄົນລາວໃຊ້ເອີ້ນແຟນຂອງເຂົາເຈົ້າດ້ວຍຄຳໆນີ້ຄືກັນ
ດັ່ງນັ້ນນາງຈຶ່ງໂລ່ງອົກໄປ
ມາປະຈວບກັບວ່າມີຄົນມາທ້ວງວ່ານາງຊື່ວອນຜູ້ຊຶ່ງແຟນຂອງນາງຄົນນັ້ນຕິດຕາມເປັນປະຈຳ
ມັນກໍເຮັດໃຫ້ນາງສະດວດຄິດໄປວ່າ
ຫລືບາງທີແຟນຂອງນາງຄົນນັ້ນເປັນອິສຣະຂຶ້ນມາໂດຍທັນໃດ?
ອີກຢ່າງມັນເປັນໄປໄດ້ເຖິງຂນາດນີ້ບໍ່ ທີ່ຈະມີຄົນທີ່ມີຫນ້າຕາຄືນາງ?
ທັງຫມົດນີ້ມັນຍິ່ງເຮັດໃຫ້ນາງຢາກຊອກຄົ້ນຫາຄວາມຈິງໃຫ້ໃຈ
ແລະດ້ວຍຄວາມຄິດອັນວ່ອງໄວຂອງນາງ ວຽງປະພາຊຶ່ງພອມຈະວ່ານາງບໍ່ແມ່ນວອນ
ເຂົາເຂົ້າໃຈຜິດໄປແລ້ວ ນາງຈຶ່ງຕີຕາງຍິ້ມໃຫ້ທຳນອງເອີງໄປນຳ

“ຈັ່ງຊີ້ສະ ຖ້ານ້ອງບໍ່ລັງກຽດ ອ້າຍຊິໄປສົ່ງບ່ອນນ້ອງເຮັດວຽກ ແຕ່ຂໍບອກກ່ອນເດີວ່າ
ໃຜໄດ້ມາເຫັນນ້ອງໃນຊຸດແບບນີ້ ເປັນຕ້ອງ…”
ຄໍາຫມັ້ນເວົ້າບໍ່ທັນສຸດເພາະນໍ້າລາຍມັນດັນໄຫລລົງຄໍກ່ອນ
ວຽງປະພາເຮັດຄືບໍ່ເຫັນສາຍຕາທີ່ຄືຈະກືນກິນນັ້ນ ນາງປ່ອນຕົວຂຶ້ນລົດຈັກ
ຊຶ່ງຫລິ້ນເອົາຄໍາຫມັ້ນແປກໃຈເປັນການໃຫຍ່ ເພາະນາງບໍ່ໄດ້ນັ່ງແບບປີ້ນຂ້າງໃສ່
ແຕ່ກັບປີ້ນຫນ້າໃສ່ຫລັງຂອງເຂົາ

ຕລອດເວລາທີ່ລົດໂມໂຕໄຊກໍາລັງເຫາະເຫີນຢູ່ເທິງທ້ອງຖນົນຫລວງນັ້ນ
ຄໍາຫມັ້ນກໍມັກລັກຖິ້ມແສງຕາຂອງເຂົາລົງເທິງລົງໃສ່ວຽງປະພາຜູ່ນັ່ງຊ້ອນທ້າຍຢູ່ຂ້າງຫລັງ
ໂດຍສະເພາະກໍແມ່ນສະເກີດຂອງນາງທີ່ຮື້ຂຶ້ນພໍໃຫ້ໄດ້ເຫັນຂາອັນເປັນທີ່ສງວນຂອງຜູ່ຍິງຢ່າງເປັນ
ຫວັບເປັນແວມ ຄໍາຫມັ້ນບອກຕົວເອງວ່າ
ຫາກອິສຣະກັບວອນຜູ່ຊຶ່ງເຂົາຄິດວ່າຄືຍິງສາວທີ່ນັ່ງຊ້ອນທ້າຍລົດເຂົານີ້ ບໍ່ລົງລອຍກັນມື້ໃດ
ເຂົາຈະເຂົ້າມາແທນທີແລະກໍຈະບໍ່ມີວັນປະໃຫ້ນາງຫລຸດລອຍໄປອີກເລີຍ

---

ຫລັງຈາກທີ່ຄໍາຫມັ້ນມາສົ່ງວຽງປະພາທີ່ຮ້ານກິນດື່ມແຄມຂອງແລ້ວ ເຂົາກໍດິ່ງຕົງກັບໄປເຮັດວຽກ
ແຕ່ກໍບໍ່ອາດລືມບອກວ່າ ມື້ແລງຫລັງຈາກເລີກວຽກ ເຂົາຈະມາຫາ ແລະຖ້າບໍ່ມີໃຜເມືອສົ່ງນາງ
ເຂົາຈະຂັນອາສາໄປສົ່ງນາງເອງ ຄໍາຫມັ້ນອົດຄິດເປັນລົມເປັນແລ້ງບໍ່ໄດ້ ບາງທີອິສຣະອາດຈະບໍ່ຢູ່
ໄປວຽກຕ່າງແຂວງ ຫລືບາງທີສອງຄົນນີ້ອາດຈະຜິດກັນກໍໄດ້ ຊຶ່ງຖ້າເປັນແນວນັ້ນ
ມັນກໍແຮ່ງຈະດີເພາະເຂົາຈະໄດ້ມີໂອກາດທຽວຮັບທຽວສົ່ງນາງເປັນປະຈໍາ ຊຶ່ງເຂົາເອງຍອມຮັບວ່າ
ວອນຂອງເຂົາຄືນນີ້ງາມຂຶ້ນບໍ່ຕ່າງຫຍັງກັບສາວເມືອງນອກທີ່ເຂົາເຫັນໃນປຶ້ມດາຣາພາບພະຍົນໄທ
ນັ້ນເອງ ຄໍາຫມັ້ນຂີ່ລົດອອກໄປແຕ່ກໍຍັງບໍ່ວາຍໄດ້ກິ່ນນໍ້າຫອມອັນຫອມກົ້ວບໍ່ຈືດຈາງ
ແລະຊິງໄວ້ຊຶ່ງຣົດສເນ່ຫາຂອງຍິງສາວທີ່ເຂົາຫລົງຮັກຫລົງປອງຈົນຕລອດທາງ

ເມື່ອວຽງປະພາມາຮອດຮ້ານກິນດື່ມ ບ່ອນທີ່ວ່າເປັນບ່ອນທີ່ນາງເຮັດວຽກແລ້ວ
ວຽງປະພາກໍບໍ່ຮູ້ຈະູເຮັດແນວໃດ?
ຄິດແຕ່ວ່າຈະຊ່ອນຕົວແນມລັກເບິ່ງຍິງສາວທີ່ວ່າຄືນາງນັ້ນຢູ່ຈັກບາດ ແຕ່ໃນທັນໃດ
“ວອນ ໂຕຄືມາແຕ່ເຊົ້າມື້ນີ້ ກະດຽວວ່າພັ້ງນຂອງໂຕແມ່ນຕອນສິບເອັດໂມງພຸ້ນ”

ສຽງຂອງມະນີດັງຂຶ້ນ ແລະເມື່ອນາງຈ້ອງເບິ່ງວຽງປະພາຕັ້ງແຕ່ຫົວຈົນສຸດຕີນ
ນາງກໍເຖິງອຸທານວ່າ
"ຂໍໂທດ ກະດຽວວ່າເປັນຫມູ່ຂອງນ້ອງ ລາວເຮັດວຽກຢູ່ນີ້ຄືກັນ" ມະນີຜູ່ທັນສັງເກດເຫັນໄດ້ວ່າ
ຜູ່ຍິງທີ່ຢືນຢູ່ຂ້າງຫນ້າຕົນນີ້ບໍ່ແມ່ນວອນ ສ່ຽວເກີຂອງຕົນ ເພາະຜູ່ຍິງຄົນນີ້ມີສີສັນທີ່ຂາວນວນກ່ວາ
ອວບອັດເກົ່າ ແລະກໍມີຄວາມສງ່າຣາສີສົມຄວາມເປັນກຸລສະຕີຢ່າງທຸກກະບຽດນິ້ວ
"ບໍ່ເປັນຫຍັງ ຜູ່ຊາຍທີ່ມາສົ່ງຂ້ອຍມື້ກີ້ນີ້ກໍວ່າຂ້ອຍເປັນວອນຄືກັນ ສົງໃສວອນຄືຊິຄືຂ້ອຍຫລາຍ
ວຽງປະພາຮູ້ສຶກໂລ່ງໃຈທີ່ຈະບໍ່ຕ້ອງຕີເປັນວອນອີກ"

ພາຍຫລັງຈາກໄປເອົາເຄື່ອງດື່ມອັນມີນ້ຳຫມາກກ້ຽງມາໃຫ້ວຽງປະພາແລ້ວ
ມະນີຜູ່ຊື່ງພໍຮູ້ວ່າຫຍັງເປັນຫຍັງ? ກໍກ່າວຂຶ້ນດ້ວຍຄວາມລະມັດລະວັງ
ໂດຍສະເພາະກໍແມ່ນສຳນວນປິນໄທຂອງນາງທີ່ນາງຕິດປາກວ່າ
"ເອື້ອຍຄືຊິມາແຕ່ຕ່າງປະເທດແມ່ນບໍ່?"
"ແມ່ນແລ້ວ ຫາກໍ່ມາໄດ້ສອງສາມມື້ນີ້ເອງ"
ວຽງປະພາຕອບໄປພ້ອມທັງຫລຽວເບິ່ງເຂັ້ມໂມງໃນແຂນທີ່ດຽວນີ້ຊີ້ບອກວ່າໄດ້ເກືອບສິບໂມງແລ້ວ
ນາງເອງບໍ່ທັນຢາກພົບພໍ້ກັບຍິງສາວທີ່ມີຊື່ວ່າວອນຢ່າງຕໍ່ຫນ້າຕໍ່ຕາເທື່ອ
ເພາະນາງກໍບໍ່ຮູ້ວ່າຕົນຈະຮູ້ສຶກຢ່າງໃດ
ໂດຍສະເພາະກໍແມ່ນວ່າຫາກຜູ່ຊາຍຄົນທີ່ມາກັບວອນນັ້ນເປັນອິສຣະ

ດ້ວຍວ່າບໍ່ຮູ້ຈັກແນວເອົາມາເວົ້າມາລົມ ໂດຍສະເພາະກໍກັບເພື່ອນຂອງວອນ
ຊຶ່ງນາງແນ່ໃຈວ່າຄົງຈະຮູ້ເລື້ອງລັບລົມຄົມໃນໄດ້ດີລະຫວ່າງວອນກັບຊາຍຫນຸ່ມຄົນດັ່ງກ່າວ
ເພາະຍິ່ງເບິ່ງຈາກຖ້ອຍຄຳທີ່ລະມັດລະວັດແຕ່ລະຄຳເວົ້າ ແລະພິລຸດທີ່ໃຫ້ຈັບຜິດໄດ້
ວຽງປະພາກໍເຖິງກັບແນ່ໃຈວ່າ ຊາຍຫນຸ່ມທີ່ມາພົວພັນກັບວອນນັ້ນເປັນອິສຣະຢ່າງບໍ່ຕ້ອງສົງໃສ
"ຂໍຕົວກ່ອນເດີ ຊິຕ້ອງໄດ້ໄປຕລາດກ່ອນ ແລ້ວມື້ຫນ້າມື້ໃນຊິມາແວະມາຢາມຮ້ານນີ້ອີກ"
ວຽງປະພາລຸກຂຶ້ນແລະພວມວ່າຊິກ້າວຂາອອກຈາກຮ້ານ
ກໍມີສຽງຮ້ອງຈາກເຈົ້າຂອງຮ້ານດັງຂຶ້ນທາງຫນ້າວ່າ
"ວອນ ມາຊ່ອຍກັນແຕ່ເຊົ້າກໍດີແລ້ວ ກຳລັງວ່າ..."
ມະນີເອົານິ້ວມືຈຸ່ຍຮີມສົບໄວ້ເປັນທຳນອງວ່າ ກ່ອນຊິເວົ້າຫຍັງຕໍ່ ເຊີນກະລາຫົວເບິ່ງໆຄັກແດ່
ວອນບໍ່ ຊິໂກ້ເກ້ຈົນເທິງຂນາດນີ້?
ວຽງປະພາຍິ້ມໃຫ້ຢ່າງສຸພາບ ກ່ອນທີ່ຈະພາຮ່າງຄີງອັນສຸດແສນຈະອໍຣະຊອນດັ່ງນາງຟ້າລົງມາດິນ
ຫລັບຫາຍໄປຈາກສາຍຕາຂອງລູກຄ້າ ທີ່ພວມທະຍອຍກັນເຂົ້າມາໃນຮ້ານນັ້ນ

## ໙. ຮັກສາມເສົ້າ

ອິສຣະຮູ້ສຶກວ່າວອນວິໄລມີສີຫນ້າເສົ້າຊຶມວາດໃດວາດນຶ່ງໃນແລງມື້ນີ້
ຈະເວົ້າແລ້ວນັບຕັ້ງແຕ່ເຂົາໄປຮັບເອົານາງມາແຕ່ຮ້ານກິນດື່ມ ນາງບໍ່ເອີ່ຍຫຍັງລົມກັບເຂົາຈັກຄຳ
ຊຶ່ງນັ້ນເປັນສິ່ງທີ່ຜິດປົກກະຕິ ຖ້າເປັນຄືທຸກຄືນທີ່ພໍໄດ້ເຫັນຫນ້າເຂົາ
ນາງຈະສົ່ງຮອຍຍິ້ມທີ່ພໍເຫັນແລ້ວ ກໍພາໃຫ້ເຂົາຫາຍເມື່ອຍໄດ້ໃນທັນທີ
ຖ້າເຂົາຈະຖາມຫຍັງນາງຫລາຍ ນາງກໍມີແຕ່ວ່າ ນາງບໍ່ຄ່ອຍສະບາຍປານໃດ?

ອິສຣະເອງລະຍະຫລັງໆນີ້ກໍຄາວຽກຫລາຍຂຶ້ນ ເພາະນອກຈາກວຽກປະຈຳແລ້ວ
ເຂົາຍັງທຳຫນ້າທີ່ສອນຫນັງສືເຊັ່ນພາສາອັງກິດແລະເລກ
ແຕ່ກ່ອນຫັ້ນເຂົາບໍ່ເຄີຍຄິດເຖິງຄວາມສຳຄັນຂອງເງິນຄຳເລີຍ ແຕ່ມາລະຍະຫລັງໆ
ເມື່ອຮູ້ວ່າວອນວິໄລຕ້ອງເຮັດວຽກຫນັກເພື່ອສະສົມເງິນທອງໄວ້ເພື່ອຈະໄດ້ມີກິຈການການຄ້າ
ເປັນຂອງຕົນເອງ ອິສຣະກໍເລີຍໄປຮັບສິດສອນນັກຮຽນຢູ່ໂຮງຮຽນຂອງເອກຊົນ
ໃນຕອນແລງຂຶ້ນມາ ອີກຢ່າງໃນເວລາວັນເສົ້າວັນທິດນັ້ນ
ເຂົາກໍຍັງຂັນອາສາໄປເປັນຄູສອນບໍ່ເອົາເງິນເດືອນໃຫ້ແກ່ເດັກວັດທີ່ຢາກຮ່ຳຢາກຮຽນເອົາຄວາມຮູ້
ແຕ່ຫາກບໍ່ມີຄ່າຈ້າງຮຽນອີກດ້ວຍ

ວອນວິໄລຜູ່ຊຶ່ງບໍ່ວ່າຍາມໃດກໍເຫັນຊຶ້ງໃນຈິດໃຈອັນດີງາມເຂົານັ້ນ
ມາຄືນນີ້ນາງຊ່າງເຫມືອນເປັນຄົນອື່ນໄປໄດ້
ຫລືວ່ານາງບໍ່ຕ້ອງການໃຫ້ເຂົາໃຊ້ເວລາທີ່ມີຄ່າເສັຽຖິ້ມລ້າ? ຫລືໃນທີ່ສຸດຄຳເວົ້າຂອງບຸນມີໃດນຶ່ງ
ອາດຈະເຮັດໃຫ້ນາງຄິດຫນັກ? ເພາະເພື່ອນຂອງເຂົາຈະເວົ້າຫຍັງບໍ່ຄ່ອຍລະວັງຖ້ອຍລະວັງຄຳ
ແຕ່ເຖິງຈະເປັນຢ່າງໃດ ນາງກໍຄວນຮູ້ວ່າ
ເຂົານັ້ນຍືນຢູ່ຄຽງຂ້າງນາງຕລອດມາແລະກໍຈະຕລອດໄປ ຫາກວ່ານັ້ນຄືຄວາມສົງສານ
ຄວາມເຂົ້າໃຈ ແລະ... ມາຮອດນີ້ອິສຣະບໍ່ອາດສາມາດຕໍ່ຕື່ມໄດ້ວ່າ ມັນເປັນຄວາມຮັກ
ເພາະສຳຫລັບເຂົາ ຄວາມຮັກນັ້ນເຂົາມີໄວ້ໃຫ້ແກ່ວຽງປະພາຜູ່ນຶ່ງຜູ່ດຽວຈົນຫມົດແລ້ວ
ອິສຣະໄດ້ແຕ່ບອກຕົນເອງ ຫາກວ່າຍົກເວັ້ນສິ່ງດັ່ງກ່າວແລ້ວ ວອນວິໄລຄືທຸກສິ່ງທຸກຢ່າງຂອງເຂົາ
ທີ່ເຂົາບໍ່ອາສາດພານພົບໄດ້ອີກແລ້ວໃນໂລກທີ່ບູດບັງອຫນ່ອຍນີ້

---



ຄ່ຳຄືນນີ້ພຣະຈັນຊ່າງໃສສ່ອງ
ຢູ່ເທິງທົ່ວທ້ອງຟ້າບໍ່ມີເມກເຝື້ອຈັກກ້ອນ
ແຕ່ສິ່ງດັ່ງກ່າວມັນຊ່າງກົງກັນຂ້າມກັບຫົວໃຈ
ທີ່ຊອກຊ້ຳຂອງວອນວິໄລ
ຖ້ອຍຄຳແຕ່ລະຄຳຂອງມະນີຊ່າງເຫມືອນກັບ
ມີດທີ່ກີນແທງຫົວໃຈ
ນາງຄືນນັ້ນ...ຍິງສາວທີ່ເລີ່ເລີດ
ທີ່ພຽບພ້ອມໄປດ້ວຍທຸກສິ່ງ...ອິສຣະມາໃສ່
ໃຈນຳເຮົາກໍເພາະຄວາມຄ້າຍຄືງກັນ
ຂອງນາງກັບຍິງຄືນນັ້ນ...
ແລະເມື່ອເຂົາທັງສອງໄດ້ມີໂອກາດ
ພົບກັນອີກຄັ້ງ ຄືນດີກັນອີກຄັ້ງ
ແລ້ວມັນຈະມີເຫລືອຫຍັງໃນດວງໃຈຂອງຄົນທີ່ນາງຮັກ ຄົນທີ່ນາງເທີດທູນ
ແມ້ນຊີວິດນີ້ກໍຍອມແລກປ່ຽນໃຫ້ໄດ້ ນີ້ນໍທີ່ເພິ່ນວ່າ ກິນນ້ຳໃຕ້ສອກ
ຫລືດັ່ງເພງສ່ວນເກີນທີ່ນາງເຄີຍໄດ້ຍິນມານັ້ນ ມາວັນນີ້ມັນຊ່າງກັດກ່ອນດວງໃຈນ້ອຍໆຂອງນາງ
ໃຫ້ມະລາຍຫາຍໄປຢ່າງບໍ່ມີເຫລືອໄວ້ຊຶ່ງເຍື້ອແລະໃຍອີກຕໍ່ໄປ

ຄືນນີ້ ຫາກເປັນຄືທຸກວັນຄືນທີ່ຜ່ານມາ ທີ່ອິສຣະໄດ້ເຂົ້າມາແວະວຽນໃນຊີວິດຂອງນາງນັ້ນ
ນາງຄົງຈະມີຄວາມສຸກ ເພາະມີເຂົາເຝົ້າດູແລຢູ່ບໍ່ຫ່າງ
ສາຍຕາທີ່ບົ່ງບອກເຖິງຄວາມອີດູຕົນສົງສານຂອງເຂົາທີ່ມີຕໍ່ນາງນັ້ນ ຫາກວ່າເປັນຍາມອື່ນແລ້ວ
ຫົວໃຈດວງນີ້ຄົງຈະຕ້ອງເຕັມປ່ຽມໄປດ້ວຍຄວາມປິຕິຊົມຊື່ນ
ບໍ່ຕ່າງຫຍັງກັບນົກນ້ອຍທີ່ໄດ້ຄວາມດູແລເອົາໃຈໃສ່ຈາກແມ່ຂອງມັນ ຍິ່ງໄປກ່ວານັ້ນ
ຝາມືທີ່ແຂງແກ່ນຂອງເຂົາທີ່ເຝົ້າປະຄອງເອົາເສັ້ນຜົມທີ່ຕົກລົງເທິງໃບຫນ້າຂອງນາງອອກ
ດ້ວຍຄວາມຖນຸຖນອມ ເຮັດໃຫ້ນາງຢາກຈະຊົງໄວ້ຊຶ່ງພາບບໍຣິສຸດພາບນີ້
ຈົນຕາບເທົ່າລົມຫາຍໃຈບາດສຸດທ້າຍຂອງນາງ

ໂອ້ດວງເດືອນເຈົ້າຂຶ້ນສູງເກົ່ງນະພາແລ້ວ ແຕ່ອິສຣະກໍຍັງບໍ່ຍອມກັບບ້ານ
ເຂົາຄົງຈະອິດເມື່ອຍທີ່ຕ້ອງຕາກຕຳເຮັດວຽກເຮັດການມາຈົນຫມົດມື້ຫມົດເວັນ

ແຕ່ເຂົາກໍຍັງເປັນຫ່ວງເຮົາ ໂອ້ຟ້າດິນໃດບໍຊ່າງປັ້ນແຕ່ງໃຫ້ມີຄົນດີເຊັ່ນເຂົາຄົນດຽວໃນໂລກນີ້ ເປັນຫຍັງຟ້າດິນຈຶ່ງສົ່ງເຂົາມາໃຫ້ເຮົາຮັກ ເຮົາຫວັງ ແລ້ວກໍຕ້ອງມາພາກຈາກເຂົາໄປໃນທີ່ສຸດ

ວອນວິໄລຊ້ອນນ້ຳຕາບໍ່ໃຫ້ໄຫລອອກ
ເພາະຊີວິດທີ່ອາພັບຂອງນາງຄົງຕ້ອງການຄວາມເຂັ້ມແຂງນີ້ໃນວັນນຶ່ງຂ້າງໜ້າ
ວັນທີ່ໂລກນີ້ບໍ່ມີຄົນທີ່ຊື່ວ່າ ອິສຣະຜູ່ເປັນຍອດດວງໃຈອີກແລ້ວ

---

"ຂໍໂທດຫລາຍໆ ມີໃຜຮູ້ບໍ່ວ່າ ວຽງປະພາຢູ່ໃສ?"
ອິສຣະຊອກຖາມຜູ່ຄົນທີ່ມາໃນວັດຕັ້ງແຕ່ພົ້ນປາກປະຕູວັດເຂົ້າມາພຸ້ນ
"ນາງວຽງປະພາຜູ່ມາແຕ່ອະເມລິກາແມ່ນບໍ່?" ແມ່ປ້ານຶ່ງຂານຕອບ
ອັນເຮັດໃຫ້ອິສຣະໜ້າບານຂຶ້ນມາໃນທັນທີ
"ແມ່ນແລ້ວປ້າ!"
"ຫວ່າງກີ້ນີ້ ປ້າກະຍັງເຫັນລາວໂຈມພາເຂົ້າໄປໃຫ້ຄູບາຢູ່ຫັ້ນເດ"
ແມ່ປ້າຊີ້ມືທີ່ຫວ່າງຈາກຕິບເຂົ້າມະລຸ້ນມະຕວຍໄປທາງໜ້າສະຖານທີ່
ບ່ອນທີ່ພຣະສົງອົງຄະເຈົ້ານັ່ງລຽນລາຍກັນເປັນຖັນເປັນແຖວຢູ່
"ຂອບໃຈປ້າຫລາຍໆ ຂໍໃຫ້ບຸນຄ້ຳບຸນຊູເດີປ້າເດີ"
"ໂຕຄືກັນຫັ້ນລະ ບັກຫລານ"

ອິສຣະບໍ່ຮອດໄດ້ຍິນວ່າປ້າເວົ້າຫຍັງຕໍ່ ເພາະເຂົາມົວແຕ່ແນມໄປທາງທີ່ປ້າຊີ້ມືບອກໃຫ້
ແລະໃນທັນໃດນັ້ນເອງ
ຄວາມຮັກທີ່ຄັ້ງນຶ່ງວ່າຈະບໍ່ມີວັນເປັນຈິງຂຶ້ນມານັ້ນກໍຈູມຂຶ້ນມາໃນກາງດວງໃຈຂອງເຂົາ
ບໍ່ຕ່າງຫຍັງກັບທີ່ແຮກເລີ້ມໄດ້ເຫັນນາງນັ່ງຢູ່ກ້ອງຕົ້ນຮົ່ມໄມ້ທີ່ມະຫາວິທະຍາໄລນັ້ນ
ວຽງປະພາສອງມືຖືພາເຂົ້າພຽນຕໍ່ໃຫ້ທ່ານຜູ່ອະວຸໂສທີ່ຍືນຢູ່ເບື້ອງໜ້າເພື່ອຈະເອົາໄປຖວາຍ
ໃຫ້ພຣະສົງໄດ້ສັນອີກຕໍ່ນຶ່ງ ຢ່າງໄວເທົ່າທັນກັບຫົວໃຈທີ່ຮຽກຫາ
ອິສຣະຟ້າວໂຖມຕົວເຂົ້າໄປຮັບເອົາພາເຂົ້ານຳນາງ

"ອິສຣະ!" ວຽງປະພາໄດ້ອຸທານຂຶ້ນດ້ວຍຄວາມບໍ່ນຶກຝັນ
"ພາ!" ມືຂອງເຂົາກຳແໜ້ນກັບມືຂອງນາງ ມັນນຶ່ງເຂົາບໍ່ຢາກໃຫ້ມືທີ່ນຸ່ມນວນນີ້ຫລຸດມືໄປອີກ

“ຂໍໂທດເດີ ຊິໄດ້ເອົາພາເຂົ້າໄປຫາຄູບາຜູ່ເພິ່ນນັ່ງຖ້າສັນອາຫານຢູ່ຫັ້ນກ່ອນ”
ສຽງຂອງຊາຍຂ່ອນອະຍຸທີ່ຢູ່ຂ້າງຫນ້າສະກິດບອກຄູ່ຫນຸ່ມສາວທີ່ຕ່າງກໍໄດ້ຈ້ອງມອງຕາກັນ
ໃນຂະນະທີ່ມືຂອງທັງກໍາແຫນ້ນຢູ່ກັບພາເຂົ້ານັ້ນ
“ຂໍໂທດຂະນ້ອຍ” ວຽງປະພາເປັນຜູ່ເປັ່ງຄໍາເວົ້າອອກມາກ່ອນ ອິສຣະເອງກໍຫາຮູ້ສຶກຕົວວ່າ
ຕົນນັ້ນຢູ່ໃນສາຍຕາຂອງຄົນທັງວັດທີ່ມາຮ່ວມເຮັດບຸນນັ້ນ
“ຂໍໂທດນໍາຫລາຍໆ” ອິສຣະກ່າວຂໍໂທດນໍາຜູ່ອະວຸໂສກ່ວາ
ວຽງປະພາຊຶ່ງຕອນນັ້ນຫນ້າແດງໄດ້ທີກໍເລີຍຖອນມືອອກຈາກອຸ້ງມືຂອງອິສຣະໃນທັນໃດ

ຫລັງຈາກແຍກຕົວໄປນັ່ງກັນຢູ່ຫ່າງຈາກຜູ່ຄົນທີ່ມາຕັກບາດແລ້ວ
ອິສຣະກໍເປັນຜູ່ຕໍ່ວ່າຕໍ່ຂານຂຶ້ນມາກ່ອນວ່າ
“ພາກໍຊ່າງເຮັດ ມາຢາມເມືອງລາວທັງເທື່ອກໍບໍ່ບອກໃຫ້ຮູ້” ເວົ້າອອກໄປແລ້ວຈຶ່ງຮູ້ສຶກຕົວວ່າ
ຊິໃຫ້ວຽງປະພາບອກຂ່າວຕົນແນວໃດ ແນວຕົນບໍ່ເຄີຍສົ່ງຂ່າວຄາວໃຫ້ນາງຮູ້ວ່າຕົນນັ້ນຢູ່ໃສເລີຍ?
ວຽງປະພາຫລຽວເບິ່ງຫນ້າ ຄິດວ່າຈະຕອກຄືນຈັກບາດໃຫ້ສົມກັບການກະທໍາຂອງເຂົາ
ແຕ່ເມື່ອເຫັນດວງຕາທີ່ອ້ອນວອນໃນຄວາມຜິດນັ້ນ ວຽງປະພາກໍເລີຍກ່າວລ້ຽງໄປທາງອື່ນ
“ວ່າຊິສັ່ງຄວາມນໍາວອນວິໄລໃຫ້ຮູ້ນໍາຢູ່
ແຕ່ບໍ່ຮູ້ວ່າອິສຣະຄົນໃຫມ່ນີ້ຈະຍັງຈື່ຈໍາວຽງປະພາຄົນເກົ່າຢູ່ບໍ່?” ແຕ່ເຖິງປານນັ້ນ
ນາງກໍບໍ່ອາດທີ່ຈະກະເທາະກະແທະເຂົາຕາມປະສາຜູ່ຍິງບໍ່ໄດ້

ທັນທີທີ່ໄດ້ຍິນຄໍາວ່າ ວອນວິໄລ ຢ່າງເຕັມປາກຈາກຍິງຜູ່ທີ່ເຄີຍເປັນຍອດປາຖນາ
ອິສຣະກໍສະເດືອກວ່າ ໂອ້ສົມພໍວອນວິໄລມີການປ່ຽນແປງໄປ
ຄົງຈະຄິດນ້ອຍເນື້ອຕໍ່າໃຈທີ່ຮູ້ວ່າເຂົາມີຄົນເຄີຍຫລົງຮັກຫລົງປອງມາກ່ອນ
ແລະໃນຂະນະດຽວກັນນັ້ນ
ເຫດການຮັກສາມເສົ້ານີ້ກໍເຮັດໃຫ້ເຂົາຕະຫນັກເຖິງເສັ້ນທາງທີ່ເຂົາກໍາລັງເດີນໄຕ່ຢູ່ນີ້

ພວມວ່າຈະເອີ່ຍຫຍັງອອກໄປ ແມ່ຂອງວຽງປະພາກໍເຂົ້າມາຫາ
“ດີໃຈຫລາຍທີ່ລູກມາ ບໍ່ເຫັນກັນຕັ້ງປີກ່ວາໆ ເປັນແນວໃດຄ່ອຍສະບາຍດີຢູ່ບໍ່?”
“ສະບາຍດີຢູ່ແມ່ ແຕ່...” ອິສຣະລາກຄໍາເວົ້າເຫມືອນນຶ່ງຈະວ່າ ບໍ່ສະບາຍປານໃດ
ເພາະຫົວໃຈນັ້ນຍັງຢູ່ນໍາລູກສາວຂອງແມ່
ແຕ່ຄວາມສໍານຶກໃນການປະພຶດຕົວຈິງຂອງຕົນເທົ່າທີ່ຜ່ານມານັ້ນ
ເຮັດໃຫ້ເຂົາຕ້ອງຝືນທົນຢຸດຄໍາເວົ້າທີ່ຝັງເຮັ້ນຢູ່ໃນຫົວໃຈແຕ່ພຽງຜູ່ດຽວ

ແມ່ພາສັງເກດເຫັນວ່າ ອິສຣະເປັນຜູ່ໃຫຍ່ຫລາຍຂຶ້ນ ຊຶ່ງຫາກເປັນເມື່ອປີກ່ອນນັ້ນ ແມ່ຢາກຈະບອກວ່າ
ອັນຄວາມຮັກທີ່ວຽງປະພາມີໃຫ້ເຂົານັ້ນມັນຊ່າງໜັກກ່ວາຂຸນເຂົາແລະກ້ວາງເລິກກ່ວາມະຫາສມຸດ
ຈະມາຢັ້ງໄດ້ ຊຶ່ງນັ້ນກໍບໍ່ຕ່າງຫຍັງໄປຈາກຄວາມຮັກທີ່ແມ່ໄດ້ມີໃຫ້ພໍ່ຂອງນາງ
ບໍ່ວ່າຄັ້ງຍັງມີຊີວິດຢູ່ແລະແມ້ນວ່າຈະຕາຍຈາກກັນໄປແລ້ວກໍຕາມ

ແມ່ເຂົ້າໃຈດີວ່າ ສອງຫນຸ່ມສາວນີ້ຍັງມີຫລາຍສິ່ງທີ່ຕ້ອງໃຫ້ຮຽນຮູ້
ປຣິນຍາບັດກໍເປັນພຽງປະກາສນິຍະບັດທາງດ້ານວິຊາອາຊີບ
ບໍ່ແມ່ນເຄື່ອງຫມາຍຂອງການຮູ້ຈັກຊີວິດແລະເຂົ້າໃຈຊີວິດເລີຍ
ສິ່ງດັ່ງກ່າວຈະໄດ້ມາກໍດ້ວຍປະສົບການຕົວຈິງທີ່ມີທັງຖືກແລະຜິດ ແຕ່ເຖິງຈະເປັນຢ່າງໃດກໍດີ
ບໍ່ວ່າຜິດຫລືຖືກຕ່າງກໍໃຫ້ບົດຮຽນທີ່ລ້ຳຄ່າແກ່ຊີວິດໄດ້ ຂແນມແຕ່ວ່າເກີດມາເປັນຄົນແລ້ວ
ໃຫ້ຮູ້ຈັກຊົ່ວດີ ແລະເຖິງຍາມຄົນທີ່ເຮົາຮັກຜິດພັ້ງຈະດ້ວຍຄວາມຮູ້ເທົ່າບໍ່ເຖິງການຫລືບໍ່ກໍຕາມ
ເຮົາກໍຄວນຮູ້ຈັກໃຫ້ອະໄພ ຖ້າບໍ່ຊັ້ນຮັກທີ່ວ່າສຸດແສນຈະຍິ່ງໃຫຍ່ກຽງໄກມະຫາສານພຽງໃດ
ມັນກໍກະຈ່ອຍລ່ອຍແລະຫລຸດຫຸ້ຽນໄປໃນທີ່ສຸດນັ້ນເອງ

ກ່ອນທີ່ຈະປະໃຫ້ຫນຸ່ມສາວທຳຄວາມເຂົ້າໃຈກັນນັ້ນ ແມ່ກໍບອກວ່າໃຫ້ທັງສອງຄິດເຖິງຄັ້ງອະດີດ
ທີ່ອົດສາຖຸນຸຖນອມຮ່ວມສ້າງກັນມາ ແລະຫາກຈະພາກຈາກກັນອັນເປັນທົນທາງສຸດທ້າຍນັ້ນ
ແມ່ກໍວ່າໃຫ້ຈາກກັນຖານມິດເພາະວັນນຶ່ງຕ່າງຄົນອາດຕ່າງໄດ້ເພິ່ງພາອາໃສກັນກໍເປັນໄດ້

ສຽງສວດມົນໃຫ້ພອນຂອງພຣະສົງອົງຄະເຈົ້າດັງຂຶ້ນບໍ່ດົນຫລັງຈາກທີ່ແມ່ກັບໄປຍັງສະຖານທີ່
ທຳບຸນແລ້ວ ວຽງປະພາຜູ່ທີ່ຍັງຢູ່ໃນອີກໂລກນຶ່ງຊຶ່ງຫ່າງໄກຈາກຄວາມສັບສົນວຸ່ນວາຍຂອງໂລກນີ້
ປນົມສອງມືເຂົ້າກັນແລະຕັ້ງຈິດພາວະນາສົ່ງບຸນກຸສົນໄປໃຫ້ບິດາຜູ່ບັງເກີດເກົ້າ
ຂໍໃຫ້ພໍ່ຈົ່ງໄປສູ່ທີ່ສຸຂຕິເຖີດ ພໍ່ໄດ້ທຳຫນ້າທີ່ຢ່າງດີທີ່ສຸດແລ້ວສຳຫລັບພໍ່ຂອງລູກ
ສາມີທີ່ເປັນທີ່ຮັກຍິ່ງຂອງແມ່ ແລະພົລເມືອງດີຂອງຊາດບ້ານເມືອງ
ທີ່ເຖິງໃຜຈະບໍ່ເຫັນຄຸນຄ່າໃນຄວາມຮັກຫອມແຜ່ນດິນເກີດຂອງພໍ່ກໍຕາມ

ອິສຣະເມື່ອມອງເຫັນພາບວຽງປະພາຕັ້ງຈິດແນ່ວແນ່ ມະໂນຈິດຂອງເຂົາກໍຕະຫນັກໃນທັນໃດວ່າ
ຍິງສາວທີ່ນັ່ງພາວະນາຢູ່ຕໍ່ຫນ້າເຂົານີ້ມີຄວາມເຂັ້ມແຂງແລະຫມັ້ນຄົງກ່ວາເຂົາເປັນຕັ້ງ
ຫລາຍສິບເທົ່າ ຫາກຈະປຽບເຂົານີ້ກໍເຫມືອນກັບເດັກນ້ອຍທີ່ບໍ່ມີວັນຮູ້ຈັກໃຫຍ່ແລະຮູ້ຄວາມຈັກເທື່ອ

ຊີວິດຂອງເຂົາຊ່າງເຕັ້ນໄປໂຕນມາ ຫາທີ່ຈຸດທີ່ຈໍ້າບໍ່ໄດ້
ໃນຂະນະທີ່ວຽງປະພາຊິງໄວ້ຊຶ່ງຄວາມຮັກອັນບໍຣິສຸດ
ທີ່ເຂົາຈະສັມຜັດໄດ້ກໍພຽງໃນປື້ມສໍທີ່ໄດ້ອ່ານເທົ່ານັ້ນເອງ ແລ້ວນີ້ເຂົາຈະເຮັດແນວໃດ?
ອຸດົມການທີ່ຄ້ວາງເຄ່ວງ ທີ່ນັບວັນກາຍເປັນສິ່ງທີ່ຄົນເຂົາຫົວເຣາະເຍາະໃຫ້
ຄວາມສົງສານໃນວອນວິໄລຊຶ່ງເຂົາເຄີຍຄິດວ່າຈະຮ່ວມຢືນຢູ່ຄຽງຄູ່ນາງຕາບເທົ່າຊົ່ວໃດໆ
ແລະວຽງປະພາຍິງສາວທີ່ຊົ່ວຊີວິດນີ້ ເຂົາບໍ່ອາດຫລົງລືມຄວາມຮັກສລັກຈິດທີ່ເຂົາມີໄວ້ໃຫ້ນາງ
ບໍ່ວ່າເມື່ອຄັ້ງພົບກັນໃຫມ່ຈົນເຖິງເວລານາທີນີ້ໄດ້

ຫາກນີ້ເປັນເວນກັມທີ່ເຂົາໄດ້ກະທຳໄວ້ໃນຊາດປາງກ່ອນ
ກໍຂໍໃຫ້ຢ່າໄດ້ໃຫ້ມັນເຜົາຜ່ານຍອດຍິງທັງສອງທີ່ເປັນດັ່ງສາຍໃຈຂອງເຂົານີ້ເລີຍ
ຫາກວ່າຄວາມທຸກລະທົ່ມໃດທີ່ມີໃນໂລກນີ້ ທີ່ວ່າຈະກໍ່ເກີດແກ່ຍິງທັງສອງແລ້ວ
ຂໍໃຫ້ມັນມາຖາຖົມລົງໃສ່ເຂົາຜູ່ດຽວດ້ວຍເຖີດ
ອິສຣະຍໍມີຂຶ້ນສຸດເກົ້າແລະກໍປະໃຫ້ຄຳອະທິຖານນັ້ນລ່ອງລອຍໄປສູ່ສວງສວັນ ໄປສູ່ພຣະໂຄດົມ
ແລະກໍໄປສູ່ດວງວິນຍານຂອງສິ່ງສັກສິດທີ່ຄອຍປົກປ້ອງແລະຮັກສາຜືນແຜ່ນດິນລາວ
ສາຍໃຈຂອງຄົນລາວໃນທົ່ວທຸກມຸມໂລກນີ້

## ໑໐. ແລະແລ້ວເຮົາສອງກໍຕ້ອງມາພາກຈາກກັນອີກ



ວຽງປະພາສອດສາຍຕາລົງໄປທາງປ່ອງຢ້ຽມຂອງເຄື່ອງບິນເປັນຄັ້ງສຸດທ້າຍ
ກ່ອນທີ່ເຄື່ອງບິນລຳນີ້ຈະທະຍານຂຶ້ນສູ່ຟາກຟ້າ ດິນແດນລາວຄັ້ງແຮກຕ້ອງຈຳພາກ
ຄັ້ງສອງຕ້ອງຈຳຈາກ ບໍ່ຮູ້ວ່າວັນໃດນາງຈະໄດ້ຫ່ວນຢ່ອນຄືນມາອີກ ຫລືວ່ານີ້ຈະເປັນຄັ້ງສຸດທ້າຍ

ນາງກໍບໍ່ອາດໃຫ້ຄໍາຕອບໄດ້ ນາງຮູ້ແຕ່ວ່າ ຢົດນໍ້າຕາທີ່ລົນຫລັ່ງເພື່ອຄວາມຮັກນັ້ນ
ຈະບໍ່ມີວັນເຫລືອໃຫ້ລົນຫລັ່ງໄດ້ອີກຕໍ່ໄປ



ອິສຣະຊາຍທີ່ນາງເຄີຍຮັກແລະກໍບໍ່ເຄີຍຄິດວ່າຈະຮັກໃຜສເມີດ້ານ
ອີກ ມາວັນນີ້ບໍ່ພຽງແຕ່ພັດພາກຈາກນາງໄປທາງ
ລະຍະທາງເທົ່ານັ້ນ
ແຕ່ເຂົາຍັງມີຄົນທີ່ເຝົ້າຕັ້ງຕໍ່ແລະເປັນຄວາມຫວັງໃຫ້
ແລ້ວນາງເດ? ອັນທີ່ວ່ານາງຮັກເຂົານັ້ນ
ມັນເປັນຄວາມຮັກຢ່າງໃດກັນແທ້
ຮັກທີ່ຕ້ອງເອົາມາຄອບຄອງແຕ່ພຽງຜູ່ດຽວ
ຫລືຮັກຢູ່ທີ່ການໄດ້ເຫັນເຂົາມີຄວາມສຸກ ນາງກໍພອຍສຸກໃຈໄປນໍາ
ຊຶ່ງນັ້ນເຖີງຈະເປັນສິ່ງທີ່ຕ້ອງຝືນກັບກົດເກນຂອງມະນຸດ
ນາງກໍຄວນເຮັດໃຈໃຫ້ໄດ້ ນາງບອກຕົວເອງວ່າ
ບໍ່ແມ່ນຊາຍຄົນນີ້ບໍ່? ທີ່ສອນໃຫ້ນາງໄດ້ເຫັນຄຸນຄ່າຂອງການທີ່ມີແຕ່ໃຫ້
ທີ່ມີແຕ່ຄວາມບໍຣິສຸດຜຸດຜ່ອງອັນຫ່າງໄກຈາກໂລກທີ່ເຫັນແກ່ຕົວໂລກນີ້

ແມ່ພາຊຶ່ງນັ່ງຢູ່ຂ້າງລູກແລະກໍເຫັນມໍຣະສຸມຂອງຊີວິດຂອງຄວາມຮັກທີ່ລູກໄດ້ພານຜ່ານມາ
ໄດ້ແຕ່ລູບຫລັງມືລູກ ອັນຊີວິດນີ້ມັນຫາກບໍ່ເປັນຕາມສິ່ງທີ່ເຮົາຕ້ອງການແລະປາຖນາ
ນັ້ນບໍ່ຫມາຍຄວາມວ່າເຮົາຕ້ອງທໍ້ແທ້ຕໍ່ຊີວິດຫລືຫມົດສິ້ນຊຶ່ງຄວາມຫວັງ
ກໍຄືດັ່ງກະວີທີ່ອິສຣະເຄີຍຂຽນໄວ້ ແລະວຽງປະພາເອົາໄປຕິດໃສ່ກອບແຂນໄວ້ໃນຫ້ອງຂອງລູກວ່າ

ຊີວິດຖ້າບໍ່ສູ້ ຈະຢູ່ໄປມີຄ່າຫຍັງ?
ເມື່ອຟ້າຝົນລົມແດງຜ່ານໄປ
ຄວາມຫວານຊື່ນກໍຕິດຕາມມາ
ພ້ອມກັບໃບໄມ້ຫລົ່ນໃບສຸດທ້າຍ

ໃນທີ່ນີ້ ແມ່ຢາກປ່ຽນວັກສຸດທ້າຍເປັນວ່າ ພ້ອມກັບໃບໄມ້ປົ່ງໃບທໍາອິດ
ເພາະນັ້ນຄືສິ່ງທີ່ວຽງປະພາຈະຕ້ອງໄດ້ປະເຊີນໃນວັນຂ້າງຫນ້າ

ເຖິງຢ່າງໃດກໍດີ ເຖິງຈະມີແນວທີ່ບໍ່ຄິດຝັນເກີດຂຶ້ນໃນການກັບເມືອລາວຄັ້ງນີ້
ແມ່ກໍພູມໃຈໃນຕົວລູກສາວທີ່ທຳຕົວສົມກັບເປັນລູກທີ່ປະເສີດຂອງແມ່
ພາບໍ່ເປັນຄືຍິງສາວຄົນອື່ນໆທີ່ມີແຕ່ຢາກໄດ້
ທີ່ບໍ່ເຫັນຫົວອົກຄົນອື່ນທີ່ຕ່າງກໍມີຫົວໃຈແລະເລືອດເນື້ອເຊັ່ນດຽວກັບຕົນ

ນະທີ່ສນາມບິນນັ້ນ ລູກພາໄດ້ຍິ້ມແຍ່ມໃຫ້ຜູ່ຄົນທີ່ມາສົ່ງອັນມີອິສຣະແລະວອນວິໄລເປັນຕົ້ນ
ແມ່ຮູ້ວ່າຮອຍຍິ້ມນັ້ນເປັນຮອຍຍິ້ມທີ່ຕ້ອງຝືນ ແຕ່ດ້ວຍຈິດໃຈທີ່ສູງສົ່ງຂອງລູກ
ຮອຍຍິ້ມນັ້ນກໍອອກມາຢ່າງເປັນທັມມະຊາດ ແມ່ຍັງໄດ້ຍິນລູກຢອກລົ້ຕໍ່ອິສຣະວ່າ
ບາດເຂົາໄດ້ມີໂອກາດໄປອະເມຣິກາ ກໍຢ່າລືມພາວອນວິໄລໄປນຳດ້ວຍ
ແມ່ເອງກໍຮູ້ສຶກມັກຮັກໃນຈິດໃຈຂອງວອນວິໄລຢູ່ເຊັ່ນກັນ ນາງມີຄວາມເຂັ້ມແຂງ ບໍຣິສຸດໃນນ້ຳໃຈ
ແລະກໍພ້ອມທີ່ຈະເສັຽສລະໃຫ້ເພື່ອຄວາມສຸກຂອງຄົນທີ່ຕົນຮັກ
ທັງຫມົດນີ້ເຮັດໃຫ້ແມ່ອົດດີໃຈນຳອິສຣະຜູ່ທີ່ຕ້ອງການສິ່ງດັ່ງກ່າວໃນຊີວິດແລະໃນອຸດົມການ
ທີ່ບໍ່ມີໃຜຄອຍເຂົ້າໃຈໃນຊີວິດນີ້ຂອງເຂົານັ້ນ

ແລະເຫນືອສິ່ງອື່ນໃດຫມົດ
ແມ່ອົດພູມໃຈນຳລູກສາວທີ່ເປັນພິມດຽວກັບສາມີຂອງແມ່ຜູ່ທີ່ຈາກໄປຢ່າງບໍ່ມີວັນກັບ
ແມ່ໄດ້ຍິນຄົນເຂົາເລົ່າສູ່ຟັງວ່າ ຕອນພໍ່ຂອງພາຍັງເປັນຫນຸ່ມຢູ່ນັ້ນ
ແລະກໍໄປມັກຮັກກັບສາວຄົນດຽວທີ່ຫມູ່ຂອງຕົນກໍໄປມັກຮັກຢູ່
ໃນທີ່ສຸດດ້ວຍເຫັນແກ່ຜູ່ທີ່ຕົນຮັກທັງສອງ ພໍ່ຂອງພາກໍເລີຍຕັດໃຈເອົາຕົວອອກຫ່າງ
ທັງທີ່ວ່າຍິງສາວຄົນຮັກມີໃຈໃຫ້ພໍ່ຂອງພາຍິ່ງກ່ວາເພື່ອນຂອງພໍ່ອີກ
ມາໃນວັນນີ້ລູກພາກໍເຮັດຢ່າງດຽວກັນ ກ່ອນລູກຈະເອົາຕົວອອກໄປຈາກສນາມບິນນັ້ນ
ລູກໄດ້ເອົາມືຂອງອິສຣະແລະມືຂອງວອນວິໄລປະສານກັນ
ເຫມືອນນຶ່ງຈະບົ່ງບອກແລະເປັນສັກຂີພະຍານວ່າ ຂໍໃຫ້ຮັກທັງສອງຈົ່ງຢູ່ຍືນຍາວຫມັ້ນ
ຢ່າໄດ້ມີວັນສລາຍໄປກັບກາລເວລາແລະອຸປສັກທີ່ຈະມາຂວາງຫນ້າໃດໆທັງສິ້ນ

ແຕ່ເຖິງຢ່າງໃດກໍດີ ມັນກໍມີສິ່ງນຶ່ງທີ່ແມ່ບໍ່ອາດເຂົ້າໃຈໃນຕົວລູກສາວແລະໃນຕົວຂອງອິສຣະຄືກັນ
ສິ່ງນັ້ນກໍຄື ກ່ອນຄືນວັນຈະອອກເດີນທາງນັ້ນ
ວຽງປະພາແລະອິສຣະໃຊ້ເວລາສອງຕໍ່ສອງນັ່ງຈ້ອງຫນ້າກັນພາຍໃຕ້ແສງຈັນທີ່ສ່ອງແສງສລົວໆຈົນ
ຂ່ອນຄືນ ເຫມືອນນຶ່ງຈະໃຫ້ຈື່ຈຳວ່າ ຄັ້ງນຶ່ງໃນຊີວິດນີ້ ເຮົາສອງເຄີຍຮັກກັນຢ່າງຫາອັນປຽບບໍ່ໄດ້
ແຕ່ຫາກດ້ວຍຄວາມຈຳເປັນຂອງຊີວິດ ເຮົາສອງຕ້ອງມາແຍກທາງກັນເດີນ

ແຕ່ເຖິງເຮົາຈະເປັນຢ່າງໃດ  ຢູ່ໃນສະພາບໃດ
ຮັກຂອງເຮົາສອງນີ້ຈະບໍ່ມີວັນຈືດຈາງດັ່ງພຣະຈັນໃນຄ່ຳຄືນນີ້

ແມ່ພາລູບມືລູກສາວຢ່າງຖນຸຖນອມອີກຄັ້ງ
ແລະກ່ອນທີ່ແມ່ຈະຖີ້ມສາຍຕາໃຫ້ຫລັບໄຫລໄປກັບຄວາມອິດເມື່ອຍໃນການກຽມອອກເດີນທາງ
ແລະກໍການເດີນທາງໃນຕົວຈິງນັ້ນ  ແມ່ກໍສ່າຍສາຍຕາໄປເບິ່ງດວງຕາຂອງລູກເປັນຄັ້ງສຸດທ້າຍ
ໃນດວງຕາທັງຄູ່ນັ້ນບົ່ງບອກແມ່ໃຫ້ຮູ້ວ່າ
ຊີວິດຂອງລູກສາວໄດ້ເລີ້ມຂື້ນໃຫມ່ແລ້ວນັບແຕ່ເວລານາທີນີ້ເປັນຕົ້ນໄປ
ພ້ອມກັບເປືອກຕາທີ່ກຳລັງຈະຫລັບລົງນັ້ນ
ແມ່ພາກໍໄດ້ຍິນສຽງເພງດັງອອກມາຈາກແນວໃສ່ຫູຟັງຂ້າງໆລູກວ່າ
*ຄຳຫມັ້ນສັນຍາທີ່ເຄີຍໃຫ້ໄວ້*
*ແລະ ຫົນທາງໄກທີ່ຕ້ອງໄດ້ທ່ຽວທ່ອງ*
*I have a promise to keep*
*And miles to go…*



***ຈົບບໍຣິບູນ***
***ພຶສຈິກາ ໒໐໐໗***